# ໂຄງການໃຫ້ບໍລິການຂໍ້ມູນສາທາລະນະ ແລະ ການສ້າງ ຄວາມຮັບຮູ້ໃຫ້ແກ່ ຊຸມຊົນທີ່ມີຄວາມບອບບາງ ໃນ ສປປ ລາວ

## ຄູ່ມືແນະນຳສຳລັບຄູຝຶກ

ຄວາມສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມທາງສັງຄົມ

# The Public Information and Awareness Services for Vulnerable Communities Project
# Training of Trainer Manual

## #2: Gender Equality and Social Inclusion


ໃຫ້ການສະໜັບສະໜູນຄະນະວິຊາການຈາກພາກລັດໂດຍ:

ໃຫ້ທຶນສະໜັບສະໜູນໂດຍ/ Funded by:

Government of Japan

JSDF Japan Social Development Fund

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

THE WORLD BANK
IBRD • IDA | WORLD BANK GROUP

โຄງການ

ການໃຫ້ບໍລິການຂໍ້ມູນສາທາລະນະ ແລະ ການສ້າງຄວາມຮັບຮູ້ໃຫ້ແກ່ຊຸມ
ຊົນທີ່ມີຄວາມບອບບາງ ໃນ ສປປ ລາວ

# ຄູ່ມືແນະນຳສຳລັບຄູຝຶກ

"ຄວາມສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມທາງສັງຄົມ"

**ອອກແບບ ແລະ ຮຽບຮຽງໂດຍ:** ນາງ ເພັດສາຄອນ ສິມພອງບຸດຕະຂັນ, ທີ່ປຶກສາ ດ້ານຄວາມສະເໝີພາບທາງເພດ ແລະ ການມີສ່ວນຮ່ວມທາງສັງຄົມ

**ຊີ້ນຳລວມໂດຍ:** Jeanne Battello, ຫົວໜ້າໂຄງການ ການໃຫ້ບໍລິການຂໍ້ມູນສາທາລະນະ ແລະ ການສ້າງຄວາມຮັບຮູ້ ໃຫ້ແກ່ຊຸມຊົນທີ່ມີຄວາມບອບບາງ ໃນ ສປປ ລາວ, ທ່ານ ວໍລະສອນ ແດງກາຍະພິຈິດ, ຜູ້ປະສານງານກຸ່ມແລກປ່ຽນຂໍ້ມູນທີ່ດິນ


**ຂອບເຂດຄວາມຮັບຜິດຊອບ:**

ເອກະສານສະບັບນີ້ ຖືກຮວບຮວມໂດຍ ອົງການ ເຮວວີຕັດ ເພື່ອການຮ່ວມມືສາກົນ ປະຈຳ ສປປ ລາວ ແລະ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG) ພາຍໃຕ້ໂຄງການ PIASVC ໃນເດືອນ ມັງກອນ 2023.

ເພື່ອການສົ່ງເສີມການເຂົ້າເຖິງຂໍ້ມູນຂ່າວສານ, ເອກະສານນີ້ສາມາດຖືກນຳໃຊ້ໂດຍບໍ່ມີຄ່າໃຊ້ຈ່າຍໃດໆ ໂດຍຜູ້ທີ່ສົນໃຈສຳລັບການນຳໃຊ້ທີ່ບໍ່ແມ່ນ ຈຸດປະສົງທາງດ້ານການຄ້າເທົ່ານັ້ນ, ການນຳໃຊ້ວິທີການສື່ສານ ແລະ ການແປ ທີ່ແຕກຕ່າງກັນ (ທັງ ສຳເນົາເອກະສານ, ສິ່ງຂໍ້ມູນໃນເວັບໄຊທ໌, ສຽງ ແລະ ຮູບພາບອື່ນໆ) ໂດຍໄດ້ລະບຸກຳມະສິດດັ້ງເດີມ ແລະ ຮັບຮູ້ຢ່າງຈະແຈ້ງດ້ວຍໂລໂກ້ ແລະ/ຫຼື ຊື່ອົງການທີ່ກ່ຽວຂ້ອງທີ່ປະກົດໃນເອກະສານສະບັບນີ້.

**Disclaimer:**

It has been compiled by Helvetas Laos and LIWG under the PIASVC project in January 2023.

In the spirit of promoting access to information, this document will be freely available to interested parties for non-commercial use only, using different means of communication and translation (printed hard copies, link on a website, audio-visual etc.) provided original ownership is clearly acknowledged with the respective logos and/or organization name.



ປັບແກ້ ແລະ ປັບປຸງໂດຍ/ Revised and updated by:

HELVETAS LAOS

ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG

ໃຫ້ທຶນສະໜັບສະໜູນໂດຍ/ Funded by:

Government of Japan

JSDF Japan Social Development Fund

THE WORLD BANK IBRD • IDA | WORLD BANK GROUP

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

ຄະນະວິຊາການກວດກາຄູ່ມື:

1. ທ່ານ ປອ. ລີວາເມັງ ລີບົວປາວ ຮອງຫົວຫນ້າກົມທີ່ດິນ ຫົວຫນ້າ;
2. ທ່ານ ຄໍາພັນ ປະວົງວຽງຄໍາ ຫົວຫນ້າພະແນກຄຸ້ມຄອງທະບຽນ ແລະ ປະເມີນລາຄາທີ່ດິນ ຮອງຫົວຫນ້າ;
3. ທ່ານ ນາງ ຈິດຕະກອນ ບຸນຄົງ ຫົວຫນ້າພະແນກ ກົມກົດຫມາຍ ກະຊວງຍຸຕິທໍາ ຄະນະ;
4. ທ່ານ ປາວທ່າວ ຈາເພຍ ຫົວຫນ້າພະແນກ, ກົມຊົນເຜົ່າ, ສູນກາງແນວລາວສ້າງຊາດ ຄະນະ;
5. ທ່ານ ພູຂົງ ວັນນະຣາຊ ຮອງຫົວຫນ້າພະແນກຄຸ້ມຄອງທະບຽນ ແລະປະເມີນລາຄາທີ່ດິນ ຄະນະ;
6. ທ່ານ ວິລະພັນ ຈັນທະວິສຸກ ຮອງຫົວຫນ້າພະແນກບໍລິຫານ ກົມປ່າໄມ້ ຄະນະ;
7. ທ່ານ ນາງ ດວງໃຈ ຄູນໄຊດີດາ ຮອງຫົວຫນ້າພະແນກກໍ່ສ້າງພັກ ແລະ ກົງຈັກການຈັດຕັ້ງ ກົມຈັດຕັ້ງ ແລະ ພະນັກງານ, ສນູກາງສະຫະພັນແມ່ຍິງລາວ ຄະນະ;
8. ທ່ານ ພູສິດ ສີວິໄລ ວິຊາການ ກົມທີ່ດິນ ຄະນະ;
9. ທ່ານ ແກ້ວອຸດອນ ທິບວົງໄຊ ວິຊາການ ກົມທີ່ດິນ ຄະນະ;
10. ທ່ານ ນາງ ສຸລິພອນ ບົວພັນ ວິຊາການ ກົມທີ່ດິນ ຄະນະ;
11. ທ່ານ ນາງ ລັດດາວັນ ວຽງຄໍາສອນ ວິຊາການ ກົມທີ່ດິນ (ຜູ້ປະສານງານໂຄງການທະນາຄານໂລກ) ຄະນະ;
12. ທ່ານ ນາງ ອານຸສອນ ສີຫາລາດ ວິຊາການ ກົມທີ່ດິນ (ຜູ້ປະສານງານໂຄງການ Helvetas) ຄະນະ;
13. ທ່ານ ອານຸສອນ ອິນທາ ວິຊາການ ກົມກົດຫມາຍ, ກະຊວງຍຸຕິທໍາ ຄະນະ;
14. ທ່ານ ພຸດທະກອນ ຫຼວງລິດ ວິຊາການ ກົມຈັດຕັ້ງ ແລະ ພະນັກງານ, ສູນກາງສະຫະພັນແມ່ຍິງລາວ ຄະນະ;
15. ທ່ານ ສີວອນ ສອນທີປັນຍາ ວິຊາການ ກົມປ່າໄມ້ ກະຊວງກະສິກໍາ ແລະ ປ່າໄມ້ ຄະນະ;
16. ທ່ານ ນາງ ວຽງຊໍາ ຈັນທະວີໄຊ ວິຊາການ ກົມຊົນເຜ◌ົ◌່າ, ສູນກາງແນວລາວສ້າງຊາດ ຄະນະ;
17. ທ່ານ ນາງ ວົງອາກອນ ເພັງດາລິດ ຮອງຫົວໜ້າກົມຈັດຕັ້ງ-ພະນັກງານ, ສູນກາງສະຫະພັນແມ່ຍິງລາວ ຄະນະ;
18. ທ່ານ ນາງ ວິໄລຈິດ ນິດທະວົງ ພະນັກງານວິຊາການ, ສູນກາງສະຫະ ພັນແມ່ຍິງລາວ ຄະນະ.

# ສາລະບານ


ແນະນຳຫຍໍ້ກ່ຽວກັບຄູ່ມື (Brief Intro About the Tool) .......................................................... 1

ການອະທິບາຍຄຳສັບ (Definitions) ......................................................................................... 2

ກິດຈະກຳທີ່ 1: ກິດຈະກຳແນະນຳໂຕ (Introduction Activity) ..................................................... 4

ກິດຈະກຳທີ່ 2: ເພດ ແລະ ບົດບາດຍິງ-ຊາຍ (ເພດພາວະ) (Sex and Gender Activity) .................. 6

ກິດຈະກຳທີ 3: ການວິເຄາະຕົ້ນໄມ້ ບົດບາດຍິງ-ຊາຍ ຫຼື ຕົ້ນໄມ້ເພດພາວະ (Gender Tree Analysis)...... 9

ກິດຈະກຳທີ 4: ຄວາມສະເໝີພາບ ແລະ ຄວາມເທົ່າທຽມ (Gender Equality and Equity)................. 11

ກິດຈະກຳທີ 5: ການມີສ່ວນຮ່ວມທາງສັງຄົມ (Social Inclusion) ................................................ 15

ກິດຈະກຳທີ 6: ເຄື່ອງມືປະເມີນການເຮັດກິດຈະກຳ ແລະ ການຫຼີກລ້ຽງການປະຕິບັດທີ່ອາດເປັນຜົນລົບກັບຜູ້ອື່ນ (Gender Continuum)............................................................................................ 19

ເອກະສານຊ້ອນທ້າຍ: ຕົວຢ່າງກຳລະນີສຶກສາ ............................................................................ 21

# ແນະນຳຫຍໍ້ກ່ຽວກັບຄູ່ມື (Brief Intro About the Tool)

ຄູ່ມືສັ້ນສະບັບນີ້ສ້າງຂຶ້ນເພື່ອເປັນແນວທາງໃຫ້ແກ່ຄູຝຶກ ໃນການຝຶກໄລຍະສັ້ນ ກ່ຽວກັບແນວຄວາມຄິດຫຼັກຂອງ ຄວາມສະ ເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມທາງສັງຄົມ (Gender Equality and Social Inclusion). ການອອກແບບແມ່ນເພື່ອໃຫ້ເໝາະສົມກັບຜູ້ທີ່ ເຄີຍຝຶກຫົວຂໍ້ນີ້ມາກ່ອນແລ້ວ ແລະ ມີຄວາມຮູ້ທາງດ້ານການເປັນຜູ້ອຳນວຍຄວາມສະດວກ ກ່ຽວກັບຫົວຂໍ້ນີ້ ແລະ ມີປະສົບການ ໃນການເຮັດວຽກ ການສົ່ງເສີມສິດທິຂອງແມ່ຍິງ, ລວມທັງແມ່ຍິງບັນດາເຜົ່າ, ຄວາມສະເໝີພາບຍິງ-ຊາຍ ກ່ຽວກັບທີ່ດິນ ແລະ ຊັບພະຍາກອນ ທຳມະຊາດ. ຄູ່ມືນີ້ບໍ່ໄດ້ລວມເອົາທັກສະຂອງການເປັນຄູຝຶກ, ເນື້ອໃນຂະບວນການຕ່າງໆ ໃນຄູ່ມືນີ້ແມ່ນໄດ້ສັງລວມ ແລະ ປັບມາຈາກຄູ່ມືຂອງບາງອົງກອນທີ່ນຳໃຊ້ໃນລາວ.

ການອະທິບາຍຄຳສັບສ່ວນຫຼາຍແມ່ນເອົາມາຈາກກົດໝາຍທີ່ກ່ຽວຂ້ອງ ແລະ ເອກະສານອ້າງອີງອື່ນທີ່ກ່ຽວຂ້ອງ ທີ່ໃຊ້ຢູ່ໃນລາວ ແລະ ອີງໃສ່ວັດຈະນານຸກົມ ທິດສະດີຂອງນັກ ເຄື່ອນໄຫວ ກ່ຽວກັບສິດທິຂອງແມ່ຍິງ (The Dictionary of Feminist Theory).

ການນຳໃຊ້ຄູ່ມືສາມາດທີ່ຈະເອົາໄປປັບໃຊ້ໃຫ້ເຂົ້າກັບກິດຈະກຳແຕ່ລະອົງກອນ ແລະ **ສາມາດທີ່ຈະນຳໃຊ້ ບາງກິດຈະກຳ ຫຼື ທັງໝົດ ຫຼື ເຊື່ອມສານກິດຈະກຳໃດໜຶ່ງກັບກິດຈະກຳອື່ນໆ.** ສິ່ງທີ່ສຳຄັນຄື ຕ້ອງພິຈາລະນາວ່າ ກິດຈະກຳໃດເໝາະສົມກັບກຸ່ມເປົ້າໝາຍຂອງຕົນ ແລະ ພະຍາຍາມຫຼີກລ້ຽງ ການປະຕິບັດໃນສັງຄົມ ທີ່ເປັນອຸປະສັກຕໍ່ກັບວຽກງານການສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມທາງສັງຄົມ.

ການຂຽນຄູ່ມືສະບັບນີ້ບໍ່ໄດ້ໝາຍຄວາມວ່າເປັນຄູ່ມືທີ່ສົມບູນແບບ ການແນະນຳ ແລະ ໃຫ້ທິດຊີ້ນຳຈາກບັນດາທ່ານແມ່ນສຳຄັນທີ່ສຸດເພື່ອປັບປຸງໃນຕໍ່ໜ້າ ສະນັ້ນ ຂ້າພະເຈົ້າຍິນດີທີ່ຈະຮັບຟັງ ແລະ ຮຽນຮູ້ຈາກທຸກພາກສ່ວນ.

## ການອະທິບາຍຄຳສັບ (Definitions)

**1. ເພດ (Sex)**

ແມ່ນຄວາມແຕກຕ່າງທາງຊີວະວິທະຍາລະຫວ່າງ ເພດຊາຍ ແລະ ເພດຍິງ. ໝາຍຄວາມວ່າ ແມ່ນຄວາມແຕກຕ່າງທາງດ້ານຮ່າງກາຍຂອງເພດຊາຍ ແລະ ເພດຍິງ.

**2. ບົດບາດຍິງ–ຊາຍ ຫຼື ເພດພາວະ (Gender):**

ໝາຍເຖິງຄວາມຮັບຜິດຊອບ, ການປະພຶດ, ການປະຕິບັດ ແລະ ການເຄື່ອນໄຫວພົວພັນລະຫວ່າງ ເພດຍິງ ແລະ ເພດຊາຍ ທີ່ແຕກຕ່າງກັນ ຊຶ່ງສັງຄົມຍອມຮັບ ແລະ ມີການປ່ຽນແປງໄປຕາມການຂະຫຍາຍຕົວຂອງສັງຄົມ ໃນແຕ ລະໄລຍະ[1].

**3. ຄວາມສະເໝີພາບຍິງ–ຊາຍ ຫຼື ຄວາມສະເໝີພາບທາງເພດພາວະ (Gender Equality)**

ຄວາມສະເໝີພາບຍິງ –ຊາຍ ແມ່ນ ຄວາມເທົ່າທຽມກັນທາງດ້ານ ສິດ, ຜົນປະໂຫຍດ, ຄວາມຮັບຜິດຊອບ, ການຕັດສິນບັນຫາ ແລະ ໂອກາດໃນການພັດທະນາ ໃນທຸກຂົງເຂດວຽກງານຂອງສັງຄົມ ແລະ ຊີວິດຄອບຄົວ. (ແຫຼ່ງຂໍ້ມູນ: ອ້າງອີງແລ້ວໃນຟຸດໂນດ 1)

ຄວາມສະເໝີພາບ ຍິງ –ຊາຍ ຫຼື ຄວາມສະເໝີພາບທາງເພດພາວະ ແມ່ນ ຄວາມສະເໝີພາບ ຫຼື ຄວາມເທົ່າທຽມກັນໃນທຸກເພດ, ທຸກໄວ, ທຸກຊັ້ນວັນນະ, ທຸກຊົນເຜົ່າ ແລະ ທຸກເຊື້ອຊາດ. ໝາຍຄວາມວ່າ ມະນຸດເຮົາທຸກຄົນມີຄວາມເປັນອິດສະລະໃນການພັດທະນາຕົນເອງ ແລະ ສາມາດເລືອກສິ່ງທີ່ຕົນຕ້ອງການ ແລະ ຢາກເປັນ ໂດຍປະສະຈາກຂໍ້ກີດກັ້ນ, ບໍ່ຕິດພັນກັບບົດບາດຕາຍຕົວ ແລະ ປະສະຈາກການເລືອກປະຕິບັດຫຼາຍໆ ດ້ານ. ຄວາມສະເໝີພາບຍິງ-ຊາຍ ຍັງໝາຍເຖິງ ພຶດຕິກຳ, ອາລົມ, ຄວາມຮູ້ສຶກ, ແຮງຈູງໃຈ, ຄວາມຈຳເປັນ ແລະ ຄວາມຕ້ອງການ ທີ່ເທົ່າທຽມກັນ ພ້ອມທັງໃຫ້ຄຸນຄ່າເທົ່າທຽມກັນລະຫວ່າງເພດ. ຄວາມສະເໝີພາບຍິງ-ຊາຍ ບໍ່ໄດ້ໝາຍຄວາມວ່າທຸກເພດຕ້ອງຄືກັນ ແຕ່ຂຶ້ນກັບສິດທິໃນການເລືອກຂອງບຸກຄົນ, ຄວາມຮັບຜິດຊອບ ແລະ ໂອກາດ ແລະ ບໍ່ໄດ້ຂຶ້ນກັບວ່າ ຄົນນັ້ນເກີດມາໃນຮ່າງກາຍຍິງ ຫຼື ຊາຍ ຫຼື ແລ້ວແຕ່ບຸກຄົນກຳໜົດເອງວ່າເຂົາເປັນເພດໃດ[2].

**4. ຄວາມເທົ່າທຽມລະຫວ່າງຍິງ-ຊາຍ ຫຼື ຄວາມເທົ່າທຽມທາງເພດພາວະ (Gender Equity)**

ຄວາມເທົ່າທຽມລະຫວ່າງຍິງ-ຊາຍ ແມ່ນການປະຕິບັດເຊິ່ງກັນ ແລະ ກັນ ທີ່ເທົ່າທຽມ ແລະ ເປັນທຳ ໂດຍອີງຕາມພື້ນຖານຕ້ອງການ ແລະ ຄວາມຈຳເປັນຂອງບຸກຄົນນັ້ນໆ. ໃນນີ້ລວມທັງການປະຕິບັດທີ່ຄືກັນ ແລະ ຕ່າງກັນ ເພື່ອໃຫ້ໄດ້ສິດທິພື້ນຖານຂອງຄວາມເປັນມະນຸດ, ການໄດ້ຮັບຜົນປະໂຫຍດ, ຕຳແໜ່ງ, ໜ້າທີ່ ແລະ ໂອກາດທີ່ເທົ່າທຽມກັນ ໂດຍ ປາສະຈາກສິ່ງກີດຂວາງໃດໆ ທັງສິ້ນ. (ແຫຼ່ງຂໍ້ມູນ: ອ້າງອີງແລ້ວໃນຟຸດໂນດ 2)

**5. ສິດສະເໝີພາບຍິງ-ຊາຍ**

---

[1] ກົດໝາຍ ວ່າດ້ວຍຄວາມສະເໝີພາບຍິງ-ຊາຍ, ສະບັບເລກທີ 77/ສພຊ, ລົງວັນທີ 18 ພະຈິກ 2019

[2] ຜູ້ຂຽນໃຫ້ການອະທິບາຍຄຳສັບດ້ວຍຕົນເອງຈາກການອ່ານ ແລະ ຮຽນຮູ້ຜ່ານປະສົບການຕົວຈິງ, 2022

ສິດສະເໝີພາບຍິງ-ຊາຍ ແມ່ນຄວາມເທົ່າທຽມກັນໃນການພັດທະນາຕົນເອງ, ຍິງ ແລະ ຊາຍ ມີຄຸນຄ່າ ແລະ ໂອກາດເທົ່າ ທຽມກັນທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ຄອບຄົວ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ[3].

### 6. ຄວາມຫຼາກຫຼາຍ (Diversity)

ຄວາມຫຼາກຫຼາຍໝາຍເຖິງຜູ້ຄົນໃນສັງຄົມທີ່ມີບົດບາດ, ໜ້າທີ່, ຕຳແໜ່ງ, ອາຍຸ, ຊົນເຜົ່າ, ສາດສະໜາ, ຖານະທາງສັງຄົມ, ຄວາມມັກ, ຄວາມຝັນ, ຄວາມເປັນເອກະລັກທາງດ້ານວັດທະນາທຳ-ຊົນເຜົ່າ, ຄວາມພິການ ແລະ ປະສົບການຊີວິດທີ່ເໝືອນ ແລະ ແຕກຕ່າງກັນ. (ແຫຼ່ງຂໍ້ມູນ: ອ້າງອີງແລ້ວໃນຟຸດໂນດ 2)

### 7. ການມີສ່ວນຮ່ວມຂອງຄວາມຫຼາກຫຼາຍ (Diversity Inclusion)

ການມີສ່ວນຮ່ວມຂອງຄວາມຫຼາກຫຼາຍໝາຍເຖິງ ການຮັບປະກັນວ່າຜູ້ຄົນໃນສັງຄົມ ມີຄວາມສະເໝີພາບກັນ ໃນການເຂົ້າຮ່ວມກິດຈະກຳ-ການເຂົ້າເຖິງໂອກາດ, ມີສ່ວນຮ່ວມໃນການຄົ້ນຄິດ, ວາງແຜນ, ຈັດຕັ້ງປະຕິບັດ, ຕິດຕາມ ແລະ ໄດ້ຮັບຜົນປະໂຫຍດເທົ່າທຽມ ແລະ ເປັນທຳ ຕາມຄວາມຈຳເປັນ-ຕ້ອງການຂອງບຸກຄົນນັ້ນໆ. (ແຫຼ່ງຂໍ້ມູນ: ອ້າງອີງແລ້ວໃນຟຸດໂນດ 2)

### 8. ການມີສ່ວນຮ່ວມທາງສັງຄົມ (Social Inclusion)

ແມ່ນການຫຼຸດຄວາມບໍ່ເທົ່າທຽມ/ຄວາມບໍ່ສະເໝີພາບໃນຫຼາຍດ້ານ ລະຫວ່າງກຸ່ມຜູ້ທີ່ດ້ອຍໂອກາດ ແລະ ສັງຄົມໂດຍລວມ. ນີ້ເປັນການປິດຊ່ອງຫວ່າງ ຂອງຄວາມບໍ່ສະເໝີພາບ/ບໍ່ເທົ່າທຽມ ດ້ວຍການເປີດໂອກາດ ແລະ ສ້າງສິ່ງແວດລ້ອມ ເພື່ອໃຫ້ເຂົາເຈົ້າໄດ້ມີສ່ວນຮ່ວມທີ່ສະເໝີພາບ/ມີສິດເທົ່າທຽມທີ່ເປັນທຳຫຼາຍຂຶ້ນ. ການມີສ່ວນຮ່ວມທາງສັງຄົມເປັນຂະບວນການຈັດຕັ້ງປະຕິບັດ ແລະ ເພີ່ມການມີສ່ວນຮ່ວມທີ່ສະເໝີພາບ/ເທົ່າທຽມ ໃນຂະບວນການທີ່ເປັນການສ້າງຄວາມຢູ່ດີກິນດີ ແລະ ສ້າງພື້ນທີ່ໃຫ້ກັບພວກເຂົາ ເພື່ອພັດທະນາຕົນເອງຢ່າງມີຄວາມເປັນອິດສະລະ ແລະ ປະສະຈາກສິ່ງກີດຂວາງຕ່າງໆ[4].

### 9. ການສ້າງຄວາມເຂັ້ມແຂງໃຫ້ກັບແມ່ຍິງ ແລະ ເດັກຍິງ (Women and Girls' Empowerment)

ການສ້າງຄວາມເຂັ້ມແຂງໃຫ້ກັບແມ່ຍິງ ແລະ ເດັກຍິງ ແມ່ນເພື່ອໃຫ້ເຂົາເຈົ້າມີ ອຳນາດ (Power) ແລະ ສາມາດຄວບຄຸມ (Control) ຊີວິດຂອງເຂົາເຈົ້າເອງ. ການສ້າງຄວາມເຂັ້ມແຂງໃຫ້ກັບແມ່ຍິງ ແລະ ເດັກຍິງ ບໍ່ຈຳເປັນຕ້ອງສ້າງຄວາມອາດສາມາດທີ່ເນັ້ນໃສ່ເອົາສະເພາະຄວາມເທົ່າທຽມເທົ່ານັ້ນ (ເຊັ່ນ ການສຶກສາ ແລະ ສຸຂະພາບ) ແລະ ຄວາມສາມາດເຂົ້າເຖິງ-ນຳໃຊ້ ຊັບພະຍາກອນທຳມະຊາດ ແລະ ໂອກາດ (ເຊັ່ນ ທີ່ດິນ ແລະ ການເຂົ້າເຮັດວຽກ) ແຕ່ເນັ້ນເຖິງຄວາມເທົ່າທຽມ ແລະ ເປັນທຳ  ແລະ ທີ່ສຳຄັນແມ່ນເພື່ອໃຫ້ບຸກຄົນ (Agency) ໄດ້ໃຊ້ສິດທິຂອງຕົນເອງ, ຄວາມສາມາດ, ຊັບພະຍາກອນ ແລະ ໂອກາດໃນການເລືອກ ແລະ ການຕັດສິນໃຈ ດ້ວຍຕົວເຂົາເຈົ້າເອງ. (ແຫຼ່ງຂໍ້ມູນ: ອ້າງອີງແລ້ວໃນຟຸດໂນດ 2)

### 10. ການມີສ່ວນຮ່ວມຂອງຜູ້ຊາຍ ແລະ ເດັກຊາຍ (Engaging Men and Boys)

---

[3] ກົດໝາຍ ວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ, ສະບັບເລກທີ 08/ສພຊ, ລົງວັນທີ 22 ຕຸລາ 2004

[4] ຄັດຈາກ ຄູ່ມື ຄວາມສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມທາງສັງຄົມ, SNV, 2012

ແມ່ນການຊຸກຍູ້ໃຫ້ຜູ້ຊາຍ ແລະ ເດັກຊາຍປະຖິ້ມພຶດຕິກຳ ແລະ ການປະຕິບັດ ທີ່ນຳໄປສູ່ຄວາມບໍ່ເທົ່າທຽມລະຫວ່າງຍິງ-ຊາຍ ແລ້ວຫັນມາໃຫ້ຄວາມເຄົາລົບເຊິ່ງກັນ ແລະ ກັນ, ດ້ວຍການສ້າງສາຍພົວພັນທີ່ເປັນມິດ ແລະ ສະໜັບສະໜູນສິດທິມະນຸດຂອງທຸກໆ ເພດ, ທຸກໄວ, ທຸກຊັ້ນຄົນ, ທຸກຊົນເຜົ່າ ແລະ ລວມທັງຄົນພິການຢູ່ທົ່ວທຸກແຫ່ງ. (ແຫຼ່ງຂໍ້ມູນ: ອ້າງອີງແລ້ວໃນຟຸດໂນດ 2)

## ກິດຈະກຳທີ່ 1: ກິດຈະກຳແນະນຳໂຕ (Introduction Activity)

*ແຫຼ່ງຂໍ້ມູນ: ດັດປັບຈາກ ຄູ່ມື Gender Analysis and Learning System - GALS Oxfam ແລະ Social Analysis and Action - SAA, ອົງການແຄຣ໌ສາກົນ (ກິດຈະກຳແນະນຳໂຕ)*

**ຈຸດປະສົງ:** ເພື່ອຮຽນຮູ້ເຊິ່ງກັນ ແລະ ກັນ ແລະ ສ້າງຄວາມໄວ້ເນື້ອເຊື່ອໃຈລະຫວ່າງຜູ້ເຂົ້າຮ່ວມ ແລະ ຜູ້ອຳນວຍຄວາມສະດວກ ຫຼື ຄູຝຶກ

**ການກະກຽມພື້ນທີ່:** ກຽມພື້ນທີ່ກ້ວາງໃຫ້ພຽງພໍສຳລັບ 30 ຄົນ ທີ່ຈະຈັດກິດຈະກຳເປັນວົງມົນ

**ເອກະສານ/ອຸປະກອນ:** ປຶ້ມບັນທຶກ, ປາກກາ, ບັດສີ

**ເວລາ:** 20-30 ນາທີ (ຂຶ້ນກັບຈຳນວນຜູ້ເຂົ້າຮ່ວມ)

**ແນະນຳສຳລັບຜູ້ອຳນວຍຄວາມສະດວກ:**

ກິດຈະກຳນີ້ເລີ່ມຕົ້ນເປີດການສົນທະນາດ້ວຍການຖາມ ຊື່, ໜ້າທີ່, ບ່ອນເຮັດວຽກ, ປະສົບການສ່ວນຕົວກ່ຽວກັບຄວາມມັກ ໄປແຕ່ລະຫົວຂໍ້. ກິດຈະກຳນີ້ອາດຈະເຮັດໃຫ້ຜູ້ເຂົ້າຮ່ວມ ຮູ້ສຶກບໍ່ສະບາຍໃຈໃນການແລກປ່ຽນປະສົບການ ສ່ວນຕົວ. ດັ່ງນັ້ນ, ຄູຝຶກຄວນລະວັງ ແລະ ໃຫ້ຄຳແນະນຳເບື້ອງຕົ້ນກັບຜູ້ເຂົ້າຮ່ວມດັ່ງນີ້:

- ສົນທະນາກັບຜູ້ເຂົ້າຮ່ວມກ່ຽວກັບສິ່ງແວດລ້ອມພື້ນຖານໃນການຢູ່ຮ່ວມກັນ ເປັນຕົ້ນ ການເຄົາລົບ ແລະ ໃຫ້ກຽດເຊິ່ງກັນ ແລະ ກັນ
- ຢຸດ ຫຼື ສືບຕໍ່ການສົນທະນາໄດ້ທຸກເມື່ອ ເມື່ອສັງເກດເຫັນວ່າຜູ້ເຂົ້າຮ່ວມລັງເລທີ່ຈະມີສ່ວນຮ່ວມ ແລະ ສົນທະນາຮ່ວມ
- ແຈ້ງຜູ້ເຂົ້າຮ່ວມວ່າ ກິດຈະກຳເຫຼົ່ານີ້ແມ່ນການແລກປ່ຽນປະສົບການ ຢູ່ແຕ່ພາຍໃນຫ້ອງຝຶກ ແລະ ບໍ່ຄວນເອົາ ປະສົບການສ່ວນຕົວ ຂອງຜູ້ເຂົ້າຮ່ວມໄປເລົ່າຕໍ່ບ່ອນອື່ນ

- ການເອົາວິທີການນີ້ໄປປັບໃຊ້ ຕ້ອງມີຄວາມຊ່ຽວຊານ ສາມາດສັງເກດເຫັນຄວາມອ່ອນໄຫວ ແລະ ສາມາດ ຮັບມືໄດ້ເມື່ອມີຜູ້ເຂົ້າຮ່ວມທີ່ມີຄວາມຫຼາກຫຼາຍທາງດ້ານອາຍຸ, ຊົນເຜົ່າ, ຄົນພິການ ແລະ ອື່ນໆ
- ແຈ້ງຜູ້ເຂົ້າຮ່ວມວ່າໃນຫ້ອງຝຶກອົບຮົມມີຄວາມຫຼາກຫຼາຍທີ່ແຕກຕ່າງທາງດ້ານອາຍຸ, ໜ້າທີ່, ຄວາມ ເຊື່ອ ແລະ ຄວນໃຫ້ຄຸນຄ່າກັບສິ່ງເຫຼົ່ານີ້

## ຂັ້ນຕອນ ແລະ ຂະບວນການດຳເນີນກິດຈະກຳ:

<table>
<tr><td>ຂັ້ນຕອນທີ 1</td><td>ກະກຽມການ ແລະ ສົນທະນາເບື້ອງຕົ້ນ<br><br>ຈັດຕັ້ງໃຫ້ຜູ້ເຂົ້າຮ່ວມນັ່ງປິ່ນໜ້າໃສ່ກັນເປັນຄູ່ ໃນລັກສະນະຮູບວົງມົນ ຫຼື ຢືນຫ່າງໆ ກັນເປັນຄູ່ ແລ້ວອະທິບາຍຈຸດປະສົງ ຂ້າງເທິງ. ໃຫ້ຜູ້ເຂົ້າຮ່ວມ ແນະນຳຕົນເອງ ແລະ ສົນທະນາກັບຄູ່ຂອງ ຕົນ, ໃຊ້ເວລາ 2-3 ນາທີຕໍ່ 1 ຄຳຖາມ ດ້ວຍການປ່ຽນ ຖາມກັນ ແລະ ຈົດຄຳຕອບຄູ່ຂອງຕົນ. ປ່ຽນຄູ່ສົນທະນາແຕ່ລະຄຳຖາມ ແລະ ຂ້າງລຸ່ມແມ່ນຄຳຖາມແນະນຳສຳລັບການສົນທະນາ:<br><br>▪ ເຈົ້າມັກສິຫຍັງຫຼາຍທີ່ສຸດ, ຍ້ອນຫຍັງ?<br>▪ ເລີ່ມອາຍຸຈັກປີ ພໍ່ແມ່ໃຫ້ເຈົ້າຊ່ວຍວຽກ?<br>▪ ສິ່ງທຳອິດທີ່ເຈົ້າປະຕິເສດບໍ່ເຮັດຕາມຄວາມຄາດຫວັງຂອງຄົນອື່ນແມ່ນຫຍັງ ແລະ ຕອນນັ້ນເຈົ້າອາຍຸໄດ້ຈັກປີ?<br>▪ ລະຫວ່າງເພດຍິງ ແລະ ເພດຊາຍ ເຈົ້າຄິດວ່າມີຄວາມແຕກຕ່າງແນວໃດ ໃນການເຂົ້າເຖິງ ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ?</td></tr>
<tr><td>ຂັ້ນຕອນທີ 2</td><td>ທົບທວນຜົນການເຮັດກິດຈະກຳ<br><br>ໃຫ້ຜູ້ເຂົ້າຮ່ວມສະໝັກເປີດເຜີຍຄຳຕອບ 1 ຂໍ້ຂອງຄູ່ຕົນໃນກຸ່ມໃຫຍ່ ແລ້ວໃຫ້ທຸກຄົນເດົາວ່າ ຄົນນັ້ນແມ່ນໃຜ. ສືບຕໍ່ສົນ ທະນາແຕ່ລະຄຳຖາມ ແລະ ຫຼັງຈາກນັ້ນສົນທະນາຂໍຄຳຄິດຄຳເຫັນ ໂດຍທົ່ວໄປໂດຍໃຊ້ຄຳຖາມລຸ່ມນີ້:<br><br>▪ ກິດຈະກຳນີ້ຍາກ/ງ່າຍ?<br>▪ ອັນໃດເຮັດໃຫ້ມັນຍາກ/ງ່າຍ?<br>▪ ຮູ້ສຶກແນວໃດເມື່ອຄູ່ສົນທະນາຂອງຕົນເປີດເຜີຍຄຳຕອບໃຫ້ກັບຜູ້ອື່ນ?</td></tr>
</table>

| ຂັ້ນຕອນທີ່ 3 | ສະຫຼຸບກິດຈະກຳແນະນຳ<br><br>ກິດຈະກຳນີ້ເພື່ອນຳໄປສູ່ການສົນທະນາກ່ຽວກັບ ລັກສະນະທາງດ້ານຄວາມມັກ, ພຶດຕິກຳ, ເພດ, ບົດບາດທາງເພດ, ເພດພາ ວະ, ການເຂົ້າເຖິງ, ອຸປະສັກ ແລະ ຄວາມຫຼາກຫຼາຍ. ຂໍ້ມູນເຫຼົ່ານີ້ສາມາດຊ່ວຍໃຫ້ພວກເຮົາຈັດລຽງປະສົບການ ແລະ ເຂົ້າໃຈຂະບວນການຮຽນຮູ້ຂອງຜູ້ອື່ນ. |
|---|---|

## ກິດຈະກຳທີ່ 2: ເພດ ແລະ ບົດບາດຍິງ-ຊາຍ (ເພດພາວະ) (Sex and Gender Activity)

**ຈຸດປະສົງ:** ເພື່ອເຂົ້າໃຈເຖິງເພດທີ່ໄດ້ມາແຕ່ກຳເນີດ ແລະ ຂະບວນການກໍ່ສ້າງບົດບາດຍິງ - ຊາຍ (ເພດພາວະ), ຮູ້ວິເຄາະຜົນກະທົບຂອງການສ້າງບົດບາດຍິງ-ຊາຍທີ່ນຳໄປສູ່ຄວາມບໍ່ສະເໝີພາບລະຫວ່າງເພດ.

**ການກະກຽມພື້ນທີ່:** ພື້ນທີ່ເປີດກວ້າງສຳລັບເຮັດກິດຈະກຳ 30 ຄົນ

**ເອກະສານ/ອຸປະກອນ:** ເຈ້ຍແຜນໃຫຍ່, ເຟີດ, ສໍສີ, ສະກັອດເຈ້ຍ

**ເວລາ:** 60 ນາທີ

**ແນະນຳສຳລັບຜູ້ອຳນວຍຄວາມສະດວກ:**

ກິດຈະກຳນີ້ອາດນຳໄປສູ່ການທວນຄືນ ການປະຕິບັດ ການສ້າງບົດບາດຍິງ-ຊາຍ ຫຼື ການສ້າງເພດພາວະ, ສະນັ້ນ ຜູ້ອຳນວຍຄວາມສະດວກຕ້ອງວິເຄາະໃຫ້ລະອຽດວ່າການສ້າງບົດບາດ ແລະ ເພດພາວະມັນໄດ້ນຳໄປສູ່ ຄວາມບໍ່ສະເໝີພາບລະຫວ່າງເພດຄືແນວໃດ. ກິດຈະກຳນີ້ບໍ່ແນະນຳໃຫ້ເຮັດຢູ່ຂັ້ນຊາວບ້ານ ຖ້າບໍ່ມີຄວາມຊຳນານໃນການນຳພາວິເຄາະ ເປັນຕົ້ນແມ່ນການວິເຄາະຜົນກະທົບຂອງການສ້າງບົດບາດ ແລະ ເພດພາວະ ແຕ່ສາມາດໃຊ້ວິທີການນີ້ກັບ ພະນັກງານວິຊາການ ແລະ ຄູ່ຮ່ວມງານ ເພື່ອເປັນເຄື່ອງມືໃນການວິເຄາະ. ຜູ້ທີ່ຈະໃຊ້ເຄື່ອງມືນີ້ຄວນຜ່ານການຝຶກໃນການວິເຄາະ ແລະ ມີພື້ນຖານໃນການເຮັດວຽກສົ່ງເສີມ ຄວາມສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມທາງສັງຄົມ.

| |
|---|
| ສິ່ງທີ່ຄວນເຮັດ: ບໍ່ເອົາປະສົບການຂອງຜູ້ເຂົ້າຮ່ວມຄົນໃດຄົນໜຶ່ງ ມາປຽບທຽບກັບຜົນໄດ້ຮັບຂອງກິດຈະກຳ, ໃຫ້ເນັ້ນໃສ່ ການສ້າງບົດບາດຍິງ-ຊາຍ ຫຼື ການສ້າງເພດພາວະໃນສັງຄົມລາວໂດຍລວມ.<br><br>ສິ່ງທີ່ບໍ່ຄວນເຮັດ: ປຽບທຽບໜ້າວຽກຂອງເພດຍິງ-ຊາຍ ເຊັ່ນ ຝ່າຍນີ້ງເຮັດໜ້ອຍ ຫຼື ຫຼາຍ ຫຼື ເຂົ້າຂ້າງຝ່າຍໃດຝ່າຍໜຶ່ງ ແລະ ໂຈມຕີລັກສະນະຄວາມເປັນຊາຍ ຫຼື ຄວາມເປັນຍິງ. |

**ຂັ້ນຕອນ ແລະ ຂະບວນການດຳເນີນກິດຈະກຳ:**

| | |
|---|---|
| **ຂັ້ນຕອນທີ 1** | **ກະກຽມ ແລະ ແບ່ງກຸ່ມເຮັດກິດຈະກຳ**<br><br>ອະທິບາຍຈຸດປະສົງ ແລະ ຂະບວນການ ຫຼັງຈາກນັ້ນແບ່ງຜູ້ເຂົ້າຮ່ວມອອກເປັນ 6 ກຸ່ມ, ແຍກເພດຊາຍ ແລະ ເພດຍິງ (ກຸ່ມຊາຍ 3 ກຸ່ມ ແລະ ກຸ່ມຍິງ 3 ກຸ່ມ, ໃຫ້ເວລາ 20 ນາທີ ໃນການເຮັດກິດຈະກຳ ແລະ ໃຫ້ເລືອກຕົວແທນກຸ່ມເພື່ອນຳສະເໜີ ຜົນໄດ້ຮັບກັບກຸ່ມໃຫຍ່. ແຕ່ລະກຸ່ມປະຕິບັດຕາມຄຳແນະນຳຂ້າງລຸ່ມນີ້:<br>▪ <u>ເພດຍິງ - ກຸ່ມທີ່ 1:</u> ໃຊ້ເຈ້ຍ Ao ແບ່ງອອກເປັນ 2 ສ່ວນເທົ່າກັນ, ສ່ວນໜຶ່ງແຕ້ມຮູບຮ່າງເພດຍິງ ບໍ່ລະບາຍສີ, ອີກສ່ວນໜຶ່ງແຕ້ມຮູບລັກສະນະ, ການນຸ່ງຖືທີ່ສໍ່ເຖິງແມ່ຍິງລາວ ແລະ ສາມາດລະບາຍສີໄດ້;<br>▪ <u>ເພດຍິງ - ກຸ່ມທີ່ 2:</u> ສົນທະນາ ແລະ ຂຽນຄຸນລັກສະນະທີ່ແມ່ຍິງຄວນປະພຶດປະຕິບັດ, ລາຍການໜ້າວຽກທີ່ແມ່ຍິງເຮັດໃສ່ບັດສີ, ບັດໜຶ່ງຕໍ່ໜຶ່ງວຽກ ຫຼື ໜຶ່ງຄຸນລັກສະນະ. ໜ້າວຽກທີ່ແມ່ຍິງເຮັດສ່ວນຫຼາຍ ຕັ້ງແຕ່ຕອນຍັງນ້ອຍ, ເປັນຜູ້ໃຫຍ່, ຫຼັງແຕ່ງດອງ, ໄວຜູ້ສູງອາຍຸ, ວິຊາຫຼັກທີ່ເພດຍິງຮຽນ ແລະ ໜ້າທີ່ຕຳແໜ່ງທີ່ເພດຍິງເຮັດສ່ວນຫຼາຍໃນຫ້ອງການ;<br>▪ <u>ເພດຍິງ - ກຸ່ມທີ່ 3:</u> ສົນທະນາ ແລະ ຂຽນຄຳສຸພາສິດ, ບົດເພັງ, ບົດກອນ, ຄຳເວົ້າ, ຄຳຂວັນ ແລະ ອື່ນໆ...ທີ່ໃຊ້ເພື່ອສອນເພດຍິງ ແລະ ເດັກຍິງ ໃນສັງຄົມລາວແຕ່ເມື່ອກ່ອນ ແລະ ປະຈຸບັນ;<br>▪ <u>ເພດຊາຍ - ກຸ່ມທີ່ 1:</u> ໃຊ້ເຈ້ຍ Ao ແບ່ງອອກເປັນ 2 ສ່ວນເທົ່າກັນ, ສ່ວນໜຶ່ງແຕ້ມຮູບຮ່າງເພດຊາຍ ບໍ່ລະບາຍສີ, ອີກສ່ວນໜຶ່ງແຕ້ມຮູບລັກສະນະ, ການນຸ່ງຖືທີ່ສໍ່ເຖິງຄວາມເປັນເພດຊາຍລາວ ແລະ ສາມາດລະບາຍສີໄດ້;<br>▪ <u>ເພດຊາຍ - ກຸ່ມທີ່ 2:</u> ສົນທະນາ ແລະ ຂຽນຄຸນລັກສະນະທີ່ເພດຊາຍຄວນປະພຶດປະຕິບັດ, ລາຍການໜ້າວຽກທີ່ເພດຊາຍເຮັດໃສ່ບັດສີ, ບັດໜຶ່ງຕໍ່ໜຶ່ງວຽກ ຫຼື ຕໍ່ໜຶ່ງຄຸນລັກສະນະ. ໜ້າວຽກທີ່ເພດຊາຍເຮັດສ່ວນຫຼາຍ ຕັ້ງແຕ່ຕອນຍັງນ້ອຍ, ເປັນຜູ້ໃຫຍ່, ຫຼັງແຕ່ງດອງ, ໄວຜູ້ສູງອາຍຸ, ວິຊາຫຼັກທີ່ເພດຊາຍຮຽນ ແລະ ໜ້າທີ່ຕຳແໜ່ງທີ່ເພດຊາຍເຮັດສ່ວນ ຫຼາຍໃນຫ້ອງການ;<br>▪ <u>ເພດຊາຍ - ກຸ່ມທີ່ 3:</u> ສົນທະນາ ແລະ ຂຽນຄຳສຸພາສິດ, ເພງ, ຄຳເວົ້າ, ຄຳຂວັນ ແລະ ອື່ນໆ...ທີ່ໃຊ້ເພື່ອສອນເພດຊາຍ ແລະ ເດັກຊາຍ ໃນສັງຄົມລາວແຕ່ເມື່ອກ່ອນ ແລະ ປະຈຸບັນ; |

| | |
|---|---|
| ຂັ້ນຕອນທີ 2 | **ກຸ່ມນໍາສະເໜີຜົນໄດ້ຮັບຂອງກິດຈະກໍາ**<br><br>ນໍາຜົນໄດ້ຮັບຂອງການສົນທະນາ ມາຕິດໃສ່ຝາ ເປັນລັກສະນະຕົ້ນໄມ້ເພດຍິງ ແລະ ເພດຊາຍ, ຄໍາສອນໃຫ້ໃຊ້ເປັນຮາກໄມ້, ຮູບແຕ້ມເປັນລໍາຕົ້ນ, ໜ້າທີ່ ແລະ ຄຸນລັກສະນະເປັນກິ່ງ ແລະ ໃບໄມ້. ໃຫ້ຕົວແທນແຕ່ລະກຸ່ມນໍາສະເໜີຜົນການເຮັດກິດ ຈະກໍາ ດ້ວຍການເລີ່ມຈາກຮາກໄມ້ ຫາຕົ້ນ ແລະ ກິ່ງ/ໃບ, ໃຊ້ເວລາ 3-5 ນາທີຕໍ່ກຸ່ມ; ຜູ້ເຂົ້າຮ່ວມສາມາດເພີ່ມ ຫຼື ຖາມຂໍ້ມູນເພີ່ມເຕີມໄດ້. |
| ຂັ້ນຕອນທີ 3 | **ສ້າງຄວາມເຂົ້າໃຈຕໍ່ຄວາມໝາຍ "ເພດ" ແລະ "ບົດບົດບາດຍິງ-ຊາຍ"**<br><br>ຫຼັງຈາກແຕ່ລະກຸ່ມສະເໜີແລ້ວ, ໃຫ້ໃຊ້ເວລາປະມານ 15-20 ນາທີ ເພື່ອສົນທະນາກັບຜູ້ເຂົ້າຮ່ວມຕໍ່ກັບຄໍາຖາມເຫຼົ່ານີ້ ແລະ ນໍາໃຊ້ຜົນໄດ້ຮັບຈາກກິດຈະກໍາເພື່ອວິເຄາະ ແລະ ສົມທຽບກັບຄໍານິຍາມຂອງ "ເພດ" ແລະ "ບົດບາດຍິງ-ຊາຍ ຫຼື ເພດພາວະ";<br>▪ ຮູບພາບຮ່າງກາຍຈາກກຸ່ມຊາຍ ແລະ ກຸ່ມຍິງ ກຸ່ມທີ່ໜຶ່ງ ໝາຍເຖິງຫຍັງ? (ເພດ ຫຼື ບົດບາດຍິງ-ຊາຍ/ເພດພາວະ?)<br>▪ ຮູບທີ່ສອງທີ່ມີພາລະບົດບາດ/ໜ້າວຽກ/ຄຸນລັກສະນະທີ່ລະບຸຈາກກຸ່ມ ຊາຍ ແລະ ກຸ່ມຍິງ 2 ໝາຍເຖິງຫຍັງ? (ເພດ ຫຼື ບົດບາດຍິງ-ຊາຍ/ເພດພາວະ?) |
| ຂັ້ນຕອນທີ 4 | **ອະທິບາຍຄໍາສັບ "ບົດບົດບາດຍິງ-ຊາຍ" ທຽບໃສ່ຜົນຂອງກິດຈະກໍາ**<br><br>ສະເໜີຄໍານິຍາມຂອງ "ເພດ", "ບົດບາດຍິງ-ຊາຍ/ເພດພາວະ" ຂ້າງລຸ່ມນີ້ ແລະ ນໍາພາຜູ້ເຂົ້າຮ່ວມວິເຄາະ ຂະບວນການ ສ້າງບົດບາດ ຫຼື ເພດພາວະ ວ່າມີມາຄືແນວໃດ ແລະ ຜົນການສ້າງນັ້ນໄດ້ນໍາໄປສູ່ຄວາມບໍ່ເທົ່າທຽມ ລະຫວ່າງເພດໃນສັງຄົມແນວໃດ.<br><br>**ເພດ (Sex):** ແມ່ນຄວາມແຕກຕ່າງທາງຊີວະວິທະຍາລະຫວ່າງ ເພດຊາຍ ແລະ ເພດຍິງ. ໝາຍຄວາມວ່າແມ່ນຄວາມແຕກຕ່າງທາງດ້ານຮ່າງກາຍຂອງເພດຊາຍ ແລະ ເພດຍິງ.<br><br>**ບົດບາດຍິງ–ຊາຍ ຫຼື ເພດພາວະ (Gender):** ໝາຍເຖິງຄວາມຮັບຜິດຊອບ, ການປະພຶດ, ການປະຕິບັດ ແລະ ການເຄື່ອນໄຫວພົວພັນລະຫວ່າງ ເພດຍິງ ແລະ ເພດຊາຍ ທີ່ແຕກຕ່າງກັນ ຊຶ່ງສັງຄົມຍອມຮັບ ແລະ ມີການປ່ຽນແປງໄປຕາມການຂະຫຍາຍຕົວຂອງສັງຄົມ ໃນແຕລະໄລຍະ. |
| ຂັ້ນຕອນທີ 5 | **ວິເຄາະຂະບວນການສ້າງບົດບາດຍິງ-ຊາຍ ແລະ ຜົນກະທົບ**<br><br>ນໍາພາຜູ້ເຂົ້າຮ່ວມສົນທະນາ, ວິເຄາະ ແລະ ທຽບໃສ່ຄວາມໝາຍຂອງຄໍານິຍາມທີ່ນໍາສະເໜີຂ້າງເທິງ ແລະ ການເຊື່ອມໂຍງກັບຜົນໄດ້ຮັບຈາກກິດຈະກໍາກຸ່ມ. ໃຊ້ຄໍາຖາມແນະລຸ່ມນີ້ເພື່ອອໍານວຍຄວາມສະດວກໃນການສົນທະນາ: |

| | |
|---|---|
| | ▪ ໜ້າທີ່, ຄວາມຮັບຜິດຊອບທີ່ຍິງ ແລະ ຊາຍເຮັດ ພົວພັນກັບຄຳສອນຄືແນວໃດ? ຈະເກີດຫຍັງຂຶ້ນຖ້າຍິງ ແລະ ຊາຍບໍ່ເຮັດຕາມຄຳສອນເຫຼົ່ານັ້ນ?<br>▪ ຄຳສອນຕ່າງໆ ໄດ້ສ້າງຄຸນລັກສະນະຄວາມເປັນຍິງ ແລະ ຄວາມເປັນຊາຍຕ່າງກັນແນວໃດ? ມັນໄດ້ນຳໄປສູ່ຄວາມບໍ່ ສະເໝີພາບແນວໃດ?<br>▪ ການແບ່ງໜ້າທີ່, ພາລະບົດບາດເຫຼົ່ານີ້ເປັນອຸປະສັກຕໍ່ແມ່ຍິງ ໃນການເປັນຜູ້ນຳໃນຫ້ອງການ ແລະ ຊຸມຊົນແນວໃດ?<br>▪ ຜົນກະທົບທາງລົບ ຫຼື ຜົນກະທົບອື່ນໆ ທີ່ອາດເກີດຂຶ້ນກັບແມ່ຍິງ, ແມ່ຍິງຊົນເຜົ່າ, ເດັກຍິງ ໃນການເຂົ້າເຖິງ, ນຳໃຊ້ ແລະ ຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນ ທຳມະຊາດມີຄືແນວໃດ? |
| **ຂັ້ນຕອນທີ່ 6** | **ສະຫຼຸບກິດຈະກຳ**<br><br>ສັງລວມໃຫ້ຜູ້ເຂົ້າຮ່ວມຄືນ ອັນໃດ ແມ່ນ ເພດ ແລະ ອັນໃດ ແມ່ນບົດບາດຍິງ-ຊາຍ ຫຼື ເພດພາວະ ແລະ ການສາ້ງເພດ ບົດບາດຍິງ-ຊາຍ/ເພດພາວະ ໂດຍສັງຄົມ ແລະ ຄາດຫວັງໃຫ້ຍິງ ແລະ ຊາຍຕ້ອງເຮັດຕາມ ມັນໄດ້ນຳໄປສູ່ຄວາມບໍ່ສະເໝີພາບ. ຖາມຜູ້ເຂົ້າຮ່ວມຖ້າພວກເຂົາມີຄຳຖາມເພີ່ມເຕີມ, ຖ້າມີ, ໃຊ້ເວລາອະທິບາຍໃຫ້ແຈ້ງກ່ອນທີ່ຈະຍ້າຍໄປຫົວຂໍ້ໃຫມ່. |

## ກິດຈະກຳທີ 3: ການວິເຄາະຕົ້ນໄມ້ ບົດບາດຍິງ-ຊາຍ ຫຼື ຕົ້ນໄມ້ເພດພາວະ (Gender Tree Analysis)

**ຈຸດປະສົງ:** ເພື່ອສາມາດນຳຜູ້ເຂົ້າຮ່ວມວິເຄາະເຖິງຜົນກະທົບດ້ານລົບ ແລະ ບວກ ຕໍ່ກັບວຽກງານຄວາມສະເໝີພາບຍິງ-ຊາຍ.

**ການກະກຽມພື້ນທີ່:** ພື້ນທີ່ເປີດກວ້າງສຳລັບເຮັດກິດຈະກຳ 30 ຄົນ

**ເອກະສານ/ອຸປະກອນ:** ເຈ້ຍແຜ່ນໃຫຍ່, ເຟີດ, ສໍສີ, ສະກ໊ອດເຈ້ຍ

**ເວລາ:** 60 ນາທີ

**ແນະນຳສຳລັບຜູ້ອຳນວຍຄວາມສະດວກ:** ກິດຈະກຳນີ້ມີຫຼາຍອີງກອນໃຊ້ ແລະ ສາມາດດັດປັບໄດ້ຕາມຄວາມເໝາະສົມ. ສະນັ້ນ ການເຮັດກິດຈະກຳນີ້ ສາມາດເອົາມາວິເຄາະໃຫ້ເຫັນທັງຜົນກະທົບດ້ານລົບ ແລະ ດ້ານບວກທີ່ອາດເກີດຂຶ້ນໃນການວິເຄາະກັບຊຸມຊົນ. ເພື່ອຮັບປະກັນໃນການນຳໄປສູ່ການປ່ຽນແປງພຶດຕິກຳທີ່ນຳໄປສູ່ຄວາມສະເໝີພາບຍິງ-ຊາຍ ຄວນນຳພາຜູ້ເຂົ້າຮ່ວມວິເຄາະຜົນກະທົບສອງດ້ານໄປພ້ອມກັນ. ຂໍ້ຄວນລະວັງຄືຫຼີກລ້ຽງເອົາປະສົບການ ຂອງບຸກຄົນໃດໜຶ່ງມາວິເຄາະ ແຕ່ຄວນເນັ້ນບັນຫາລວມທີ່ພົບເຫັນ ຫຼື ພົ້ນເດັ່ນໃນຊຸມຊົນ. ຫົວຂໍ້ຂອງການວິເຄາະ ສາມາດໃຫ້ ຜູ້ເຂົ້າຮ່ວມມີສ່ວນຮ່ວມໃນການເລືອກ.

## ຂັ້ນຕອນ ແລະ ຂະບວນການດຳເນີນກິດຈະກຳ:

| | |
|---|---|
| **ຂັ້ນຕອນທີ່ 1** | **ອະທິບາຍຈຸດປະສົງ ແລະ ຂະບວນການ**<br><br>ອະທິບາຍຈຸດປະສົງ ແລ້ວ ເລືອກ 2 ຫຼື 3 ຫົວຂໍ້ທີ່ເຫັນວ່າເປັນບັນຫາຫຼັກໃນຊຸມຊົນ ທີ່ຍັງເປັນສິ່ງກີດຂວາງ ການມີສ່ວນຮ່ວມຂອງແມ່ຍິງ ໃນວຽກງານທີ່ດິນ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ. ແນະນຳຜູ້ເຂົ້າຮ່ວມເຮັດກິດຈະກຳເປັນກຸ່ມຍ່ອຍຕໍ່ຫົວຂໍ້ (ລວມຍິງ-ຊາຍ) ແລະ ສົນທະນາແຕ່ລະຫົວຂໍ້ ໂດຍໃຊ້ເວລາ 15-20 ນາທີ ໃນການສົນທະນາ. |
| **ຂັ້ນຕອນທີ່ 2** | **ກິດຈະກຳກຸ່ມ**<br><br>ແຕ່ລະກຸ່ມສົນທະນາ ໂດຍໃຊ້ໂຄງຮ່າງຂອງຕົ້ນໄມ້ຄວາມບໍ່ສະເໝີພາບ (ຊ້າຍມື) ກັບຕົ້ນໄມ້ຄວາມສະເໝີພາບ (ຂວາມື) ຂ້າງລຸ່ມເປັນແບບຢ່າງ. ສາຍເຫດ ແລະ ປັດໃຈໃຫ້ເປັນຮາກໄມ້, ຜົນກະທົບ ແລະ ຜົນໄດ້ຮັບໃຫ້ເປັນກິ່ງໄມ້ ແລະ ໃບໄມ້.<br><br><br> |
| **ຂັ້ນຕອນທີ່ 3** | **ກຸ່ມນຳສະເໜີຜົນໄດ້ຮັບຂອງກິດຈະກຳ** |

| | |
|---|---|
| | ແຕ່ລະກຸ່ມສະເໜີຜົນໄດ້ຮັບຂອງການສົນທະນາກຸ່ມ ດ້ວຍການເລີ່ມຈາກຕົ້ນໄມ້ບັນຫາກ່ອນ ແລ້ວຈຶ່ງໃຫ້ກຸ່ມທີ່ສົນທະນາຜົນ ປະໂຫຍດ ຫຼື ຜົນໄດ້ຮັບຂອງຄວາມສະເໝີພາບ ແລະ ການມີສ່ວນຮ່ວມທາງສັງຄົມ. ຫຼັງຈາກນັ້ນ ສົນທະນາກັບຜູ້ເຂົ້າຮ່ວມດ້ວຍການໃຊ້ຄໍາຖາມເຫຼົ່ານີ້:<br><br>▪ ຜູ້ເຂົ້າຮ່ວມ ຫຼື ຊຸມຊົນເຮົາຕ້ອງການຕົ້ນໄມ້ໃດໃນຄອບຄົວ ແລະ ຊຸມຊົນ?<br>▪ ຈະເຮັດແນວໃດເພື່ອໃຫ້ບັນລຸຜົນໄດ້ຮັບ ຕາມຕົ້ນໄມ້ຄວາມສະເໝີພາບ?<br>    ○ ເພດຊາຍ ແລະ ເພດຍິງຈະເຮັດຫຍັງແດ່?<br>    ○ ສະມາຊິກໃນຄອບຄົວຈະເຮັດຫຍັງແດ່?<br>    ○ ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ແລະ ອໍານາດການປົກຄອງບ້ານຈະເຮັດຫຍັງແດ່?<br><br>ທີມງານຜູ້ອໍານວຍຄວາມສະດວກ ບັນທຶກສິ່ງທີ່ຜູ້ເຂົ້າຮ່ວມແລກປ່ຽນກ່ຽວກັບສິ່ງທີ່ເພິ່ນຈະເຮັດ ແລ້ວເອົາເຂົ້າໃນບົດລາຍງານ ການຝຶກອົບຮົມ ຫຼື ເພື່ອເປັນແຜນຕິດຕາມຄວາມຄືບໜ້າ. |
| **ຂັ້ນຕອນທີ່ 4** | **ສະຫຼຸບກິດຈະກໍາ**<br><br>ສະຫຼຸບ ແລະ ສັງລວມກິດຈະກໍາ ພ້ອມທັງທວນຄືນສິ່ງທີ່ຜູ້ເຂົ້າຮ່ວມສົນທະນາວ່າຈະເຮັດຫຍັງເພື່ອສະໜັບສະໜູນ ຄວາມສະເໝີພາບ. |

## ກິດຈະກໍາທີ 4: ຄວາມສະເໝີພາບ ແລະ ຄວາມເທົ່າທຽມ (Gender Equality and Equity)

**ຈຸດປະສົງ:** ເພື່ອສ້າງຄວາມເຂົ້າໃຈກັບແນວຄວາມຄິດຂອງ ຄວາມສະເໝີພາບ ແລະ ຄວາມເທົ່າທຽມ, ຜູ້ເຂົ້າຮ່ວມສາມາດທີ່ຈະເອົາໄປປັບໃຊ້ກັບໜ້າວຽກຕົນເອງ, ກິດຈະກໍາໂຄງການ ແລະ ສາມາດອະທິບາຍ ຫຼື ຝຶກໃຫ້ກັບຜູ້ອື່ນ

**ການກະກຽມພື້ນທີ່:** ກຽມພື້ນທີ່ກວ້າງໃຫ້ພຽງພໍສໍາລັບການສົນທະນາ 30 ຄົນ

**ເອກະສານ/ອຸປະກອນ:** ກໍລະນີສຶກສາ, ບົດນໍາສະເໜີ, ບັດສີ, ບິກເຟີດ, ເຈ້ຍແຜນໃຫຍ່

ເວລາ: 60 ນາທີ

| |
|---|
| **ແນະນຳສຳລັບຜູ້ອຳນວຍຄວາມສະດວກ:** ກິດຈະກຳນີ້ອາດສົ່ງຜົນກະທົບທາງດ້ານຈິດໃຈ ແລະ ຄວາມຮູ້ສຶກຂອງຜູ້ເຂົ້າ ຮ່ວມບາງຄົນ. ໃນການຈັດຕັ້ງປະຕິບັດກິດຈະກຳຜ່ານມາ ອາດຕົກຢູ່ໃນພື້ນທີ່ໃດໜຶ່ງ ຂອງຂະບວນການສ້າງຄວາມເທົ່າທຽມ. ສະນັ້ນ ຜູ້ອຳນວຍຄວາມສະດວກຕ້ອງໃຫ້ແນ່ໃຈວ່າ ການວິເຄາະຕ້ອງໃຫ້ເປັນທາງ ບໍ່ມີການໂຈມຕີວ່າ ເຈົ້າເຮັດຜິດ ຫຼື ຂ້ອຍເຮັດຖືກ. ຮູບພາບທີ່ສະເໜີຕໍ່ໄປນີ້ເປັນການສະທ້ອນໃຫ້ເຫັນການນຳເອົາແນວຄວາມຄິດມາປະຕິບັດ ແລະ ຄວນ ປະຕິບັດແນວໃດ ໃຫ້ຕອບສະໜອງກັບຄວາມຈຳເປັນ ແລະ ຕ້ອງການ ແລະ ມີຄວາມຍືນຍົງ. |

**ຂັ້ນຕອນ ແລະ ຂະບວນການດຳເນີນກິດຈະກຳ:**

| | |
|---|---|
| **ຂັ້ນຕອນທີ 1** | **ສະເໜີຈຸດປະສົງກິດຈະກຳ ແລະ ແບ່ງກຸ່ມເຮັດກິດຈະກຳ**<br><br>ລະດົມແນວຄວາມຄິດກັບຜູ້ເຂົ້າຮ່ວມ ກ່ຽວກັບ ຄວາມສະເໜີພາບແມ່ນຫຍັງ ແລະ ຄວາມເທົ່າທຽມແມ່ນຫຍັງ. ຫຼັງຈາກນັ້ນ ສະເໜີຈຸດປະສົງຂ້າງເທິງ ແລ້ວແບ່ງຜູ້ເຂົ້າຮ່ວມອອກເປັນ 3 ກຸ່ມ ປະສົມປະສານ ຍິງ-ຊາຍ ເພື່ອສົນທະນາໜຶ່ງກໍລະນີສຶກສາ ຕໍ່ກຸ່ມ ໂດຍໃຊ້ເວລາ 10-15 ນາທີ. |
| **ຂັ້ນຕອນທີ 2** | **ສົນທະນາຮູບພາບປະກອບ**<br><br>ສະແດງຮູບພາບຄວາມສະເໜີພາບ ແລະ ຄວາມເທົ່າທຽມ ໃຫ້ຜູ້ເຂົ້າຮ່ວມ ແລະ ນຳພາສົນທະນາ ພ້ອມທັງປຽບທຽບກັບ ກໍລະນີສຶກສາທີ່ໄດ້ສົນທະນາໄປແລ້ວ, ໃຊ້ຄຳຖາມລຸ່ມນີ້ເພື່ອສົນທະນາແຕ່ລະຮູບພາບຂ້າງລຸ່ມ: |




- <u>ຮູບທີ່ 1:</u>  ສັງເກດເຫັນຫຍັງໃນຮູບ? ລັກສະນະທ່າທາງ ແມ່ຍິງ ແລະ ຜູ້ຊາຍເປັນແນວໃດ? ຍິງ-ຊາຍມີ ຄວາມສະເໝີພາບແລ້ວບໍ? ຖ້າແມ່ນ ຫຼື ບໍ່ແມ່ນ ຍ້ອນຫຍັງ? ຈະເຮັດແນວໃດເພື່ອ ນໍາໄປສູ່ຄວາມເທົ່າທຽມ?




- ຮູບທີ່ 2: ໃນຮູບແຖວເທິງໃຫ້ຄືກັນ ແລະ ໄດ້ຄືກັນ, ລັກສະນະນີ້ສະເໝີພາບແລ້ວບໍ? ຮູບແຖວລຸ່ມ ໃຫ້ຄືກັນ ແຕ່ຕ່າງກັນ, ຍ້ອນຫຍັງຈິ່ງເຮັດແບບນັ້ນ?



ໄດ້ຮັບການສະໜັບສະໜູນຄືກັນ. ຖືກປະຕິບັດຄືກັນ

ໄດ້ຮັບການສະໜັບສະໜູນຕ່າງກັນ. ຖືກປະຕິບັດຕ່າງກັນເພື່ອຄວາມເທົ່າທຽມ

ທຸກຄົນສາມາດເຂົ້າເຖິງ ແລະມີຄວາມເໝີພາບ ໂດຍບໍ່ຈໍາເປັນຕ້ອງມີການສະໜັບສະໜູນໃດໆ ເມື່ອອຸປະສັກ ຫຼື ສິ່ງກີດຂວາງໝົດໄປ

- ຮູບທີ່ 3: ສັງເກດເຫັນຫຍັງໃນ 3 ຮູບພາບ? ກີດຈະກໍາໂຕງ ການເຈົ້າຢູ່ໃນຮູບໃດ? ກໍາແພງສີຂາວໝາຍເຖິງ ຫຍັງ? ເຮັດແນວໃດກໍາ ແພງນັ້ນຈະໝົດໄປ?

| | |
|---|---|
| | |
| ຂັ້ນຕອນທີ່ 3 | ອະທິບາຍຄໍາສັບ ແລະ ສົນທະນາດ້ວຍການທຽບໃສ່ຮູບຂ້າງເທິງ<br><br>**ຄວາມສະເໝີພາບ ຍິງ–ຊາຍ (Gender Equality):** ຄວາມສະເໝີພາບຍິງ –ຊາຍ ແມ່ນ ຄວາມເທົ່າທຽມກັນທາງດ້ານ ສິດ, ຜົນປະໂຫຍດ, ຄວາມຮັບຜິດຊອບ, ການຕັດສິນບັນຫາ ແລະ ໂອກາດໃນການພັດທະນາ ໃນທຸກຂົງເຂດວຽກງານຂອງສັງຄົມ ແລະ ຊີວິດຄອບຄົວ.<br><br>ຄວາມສະເໝີພາບຍິງ –ຊາຍ ຫຼື ຄວາມສະເໝີພາບທາງເພດພາວະ ແມ່ນ ຄວາມສະເໝີພາບ ຫຼື ຄວາມເທົ່າທຽມກັນໃນທຸກເພດ, ທຸກໄວ, ທຸກຊັ້ນວັນນະ, ທຸກຊົນເຜົ່າ ແລະ ທຸກເຊື້ອຊາດ. ໝາຍຄວາມວ່າ ມະນຸດເຮົາທຸກຄົນມີຄວາມເປັນອິດສະລະໃນການພັດທະນາຕົນເອງ ແລະ ສາມາດເລືອກສິ່ງທີ່ຕົນຕ້ອງການ ແລະ ຢາກເປັນ ໂດຍປະສະຈາກຂໍ້ກີດກັ້ນ, ບໍ່ຕິດພັນກັບ ບົດບາດຕາຍຕົວ ແລະ ປະສະຈາກການເລືອກປະຕິບັດຫຼາຍໆ ດ້ານ. ຄວາມສະເໝີພາບຍິງ-ຊາຍ ຫຼື ທາງເພດພາວະຍັງໝາຍເຖິງ ພຶດຕິກໍາ, ອາລົມ, ຄວາມຮູ້ສຶກ, ແຮງຈູງໃຈ, ຄວາມຈໍາເປັນ ແລະ ຄວາມຕ້ອງການ ທີ່ເທົ່າທຽມກັນ ພ້ອມທັງໃຫ້ຄຸນຄ່າເທົ່າທຽມກັນລະຫວ່າງເພດ. ຄວາມສະເໝີພາບຍິງ-ຊາຍ ຫຼື ທາງເພດພາວະ ບໍ່ໄດ້ໝາຍຄວາມວ່າ ທຸກເພດຕ້ອງຄືກັນ ແຕ່ຂຶ້ນກັບສິດທິໃນການເລືອກຂອງບຸກຄົນ, ຄວາມຮັບຜິດຊອບ ແລະ ໂອກາດ ແລະ ບໍ່ໄດ້ຂຶ້ນກັບວ່າ ຄົນນັ້ນເກີດມາໃນຮ່າງກາຍຍິງ ຫຼື ຊາຍ ຫຼື ແລ້ວແຕ່ບຸກຄົນກໍາໜົດເອງວ່າເຂົາເປັນເພດໃດ.<br><br>**ຄວາມເທົ່າທຽມລະຫວ່າງຍິງ-ຊາຍ (Gender Equity:** ຄວາມເທົ່າທຽມລະຫວ່າງຍິງ-ຊາຍ ແມ່ນການປະຕິບັດເຊິ່ງກັນ ແລະ ກັນທີ່ເທົ່າທຽມ ແລະ ເປັນທໍາ ໂດຍອີງຕາມພື້ນຖານຄວາມຈໍາເປັນ-ຕ້ອງການ ຂອງບຸກຄົນນັ້ນໆ. ໃນນີ້ລວມທັງການປະຕິບັດທີ່ຄືກັນ ແລະ ຕ່າງກັນ ເພື່ອໃຫ້ໄດ້ສິດທິພື້ນຖານຂອງຄວາມເປັນມະນຸດ, ການໄດ້ຮັບຜົນປະໂຫຍດ, ໜ້າທີ່ ແລະ ໂອກາດ ທີ່ເທົ່າທຽມກັນ ໂດຍ ປາສະຈາກສິ່ງກີດຂວາງຕ່າງໆ. |
| ຂັ້ນຕອນທີ່ 4 | ສົນທະນາ ແລະ ສົມທຽບໃສ່ກິດຈະກໍາຕົວຈິງ<br><br>ອະທິບາຍໃຫ້ຜູ້ເຂົ້າຮ່ວມຕໍ່ກັບຄວາມໝາຍຂອງແຕ່ລະຮູບພາບ ແລ້ວນໍາພາສົນທະນາ ຖ້າທຽບໃສການເຂົ້າເຖິງ, ການນໍາໃຊ້, ການຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທໍາມະຊາດ ເຮົາຄວນສະໜັບສະໜູນກິດຈະກໍາໃຫ້ຢູ່ໃນລັກສະນະຂອງຮູບໃດ? ຍ້ອນຫຍັງ? |
| ຂັ້ນຕອນທີ່ 5 | ສະຫຼຸບ<br><br>ສັງລວມຜົນການສົນທະນາໂດຍລວມ ແລະ ເນັ້ນຄວາມໝາຍຂອງ ຄວາມສະເໝີພາບ ແມ່ນຂະບວນການໜຶ່ງທີ່ນໍາໄປສູ່ ຄວາມເທົ່າທຽມ ສະນັ້ນ ໃນການເຮັດກິດຈະກໍາ ຄວນຄໍານຶງເຖິງຄວາມເໝາະສົມ ແລະ ເຂົ້າໃຈມາດຖານການປະຕິບັດທາງສັງຄົມ ເຮັດແນວໃດເພື່ອໃຫ້ແນ່ໃຈວ່າ ການສະໜັບສະໜູນກິດຈະກໍາກ່ຽວກັບທີ່ດິນ ແລະ ຊັບພະຍາກອນທໍາມະຊາດ ສາມາດນໍາໄປສູ່ການລົບລ້າງມາດຖານການປະຕິບັດທີ່ເປັນສິ່ງກີດຂວາງ ໃນການເຂົ້າເຖິງ, ນໍາ |

| | |
|---|---|
| | ໃຊ້, ຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດທີ່ເທົ່າທຽມ-ເປັນທຳ ແລະ ມີຄວາມຍືນຍົງ. |

## ກິດຈະກຳທີ 5: ການມີສ່ວນຮ່ວມທາງສັງຄົມ (Social Inclusion)

*ແຫຼ່ງທີ່ມາ: ດັດປັບຈາກ ເຄື່ອງມືການຝຶກອົບຮົມ ຈາກອົງການ ແຄຣນານາຊາດ ວ່າດ້ວຍ "ການສະກັດກັ້ນ ການເອົາລັດເອົາປຽບ ແລະ ການລ່ວງລະເມີດທາງເພດ"* (*ກິດຈະກຳ: ຍ່າງດ້ວຍພະລັງ*)

**ຈຸດປະສົງ:** ເພື່ອເຂົ້າໃຈຕຳແໜ່ງ, ໂອກາດ, ສິດທິພິເສດ ແລະ ຊ່ອງຫວ່າງລະຫວ່າງບຸກຄົນ ແລະ ຄວາມຫຼາກຫຼາຍ ທີ່ແຕກຕ່າງກັນ ແລະ ຄວາມເປັນໄປໄດ້ທີ່ອາດນຳໄປສູ່ການບໍ່ມີສ່ວນຮ່ວມຂອງບາງກຸ່ມ-ບາງບຸກຄົນ. ຮຽນຮູ້ການສ້າງສະພາບແວດລ້ອມ ທີ່ສົ່ງຜົນຕໍ່ການສ້າງໂອກາດການມີສ່ວນຮ່ວມຂອງຄວາມຫຼາກຫຼາຍຢ່າງມີຄວາມໝາຍ.

**ການກະກຽມພື້ນທີ່:** ພື້ນທີ່ກວ້າງພຽງພໍສຳລັບ 6 ຄົນ ເພື່ອເຮັດກິດຈະກຳ

**ເອກະສານ/ອຸປະກອນ:** ຕົວລະຄອນສົມມຸດຂຽນໃສ່ເຈ້ຍ, ຂໍ້ຄວາມສຳລັບການເຮັດກິດຈະກຳ, ໝາກບານໃຫຍ່, ຜ້າມົນນ້ອຍສຳລັບມັດບັງຕາ

**ເວລາ:** 60 ນາທີ

> **ແນະນຳສຳລັບຜູ້ອຳນວຍຄວາມສະດວກ:** ການເລືອກຕົວລະຄອນໃນກິດຈະກຳນີ້ ໃຫ້ເລືອກເອົາຕົວລະຄອນ ທີ່ສາມາດ ເປັນຕົວແທນໃກ້ຄຽງກັບສະພາບຕົວຈິງໃນເຂດພື້ນທີ່ເຮັດວຽກ ແລະ ເຂົ້າກັບຫົວຂໍ້ການຝຶກ/ສົນທະນາ. ອະທິບາຍໃຫ້ ຜູ້ເຂົ້າຮ່ວມເຂົ້າໃຈວ່າ ນີ້ແມ່ນການສະແດງໃຫ້ເຫັນສະພາບຄວາມເປັນຈິງໃນສັງຄົມ ທີ່ຜູ້ດ້ອຍໂອກາດ ອາດເປັນບຸກຄົນ ທີ່ຖືກປະລະໄວ້ເບື້ອງຫຼັງ. ໃນການສົນທະນາພະຍາຍາມຢ່າດຶງເອົາປະສົບການຂອງບຸກຄົນທີ່ພົບ ໃນຊຸມຊົນມາເປັນເລື່ອງເລົ່າ ໃນລັກສະນະຕະຫຼົກ ຫຼື ຕອກຢ້ຳເພາະຄວາມລຳບາກ ແລະ ສິ່ງທ້າທາຍທີ່ບຸກຄົນນັ້ນພົບ, ແຕ່ຄວນເອົາມາສົນທະນາວ່າ ຄວາມຮູ້ສຶກຂອງຄົນນັ້ນ ຈະເປັນແນວໃດຖ້າເຂົາຖືກປະລະໄວ້ເບື້ອງຫຼັງ. ໃນຖານະເປັນ ພະນັກງານລັດ-ໂຄງການ-ສະມາຄົມ ຈະເຮັດແນວໃດ ເພື່ອສ້າງສິ່ງອຳນວຍຄວາມສະດວກ ໃນການມີສ່ວນຮ່ວມ ເພື່ອປິດຊ່ອງວ່າງຄວາມບໍ່ເທົ່າທຽມນັ້ນຢ່າງມີຄວາມໝາຍ ແລະ ຍືນຍົງ.

### ຂັ້ນຕອນ ແລະ ຂະບວນການດຳເນີນກິດຈະກຳ:

| ຂັ້ນຕອນທີ 1 | ອະທິບາຍຈຸດປະສົງ ແລະ ຂະບວນການເຮັດກິດຈະກຳ |
|---|---|

| | |
|---|---|
| | ສະເໜີຈຸດປະສົງ ແລະ ອະທິບາຍຂະບວນການກິດຈະກຳ ໃຫ້ຜູ້ເຂົ້າຮ່ວມ. ຂໍອາສາສະໝັກ 6 ຄົນ, ຍິງ 3 ຄົນ ແລະ ຊາຍ 3 ຄົນ ເພື່ອເຮັດກິດຈະກຳ "ຍ່າງດ້ວຍພະລັງ" ໂດຍ ນຳໃຊ້ຄຳແນະນຳຂ້າງລຸ່ມນີ້.<br><br>**ກິດຈະກຳ "ຍ່າງດ້ວຍພະລັງ"**<br><br>**ກະກຽມການ**<br><br>1. ຕົວລະຄອນບົດບາດສົມມຸດ 6 ຕົວລະຄອນ<br><br>o ສະມາຊິກຈາກໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ (ແມ່ຍິງ),<br>o ແມ່ຍິງພົບກັບຄວາມຫຍຸ້ງຍາກໃນການໄປມາ (ພິການ) ແລະ ກຳລັງຖືພາແກ່<br>o ແມ່ຍິງຜູ້ສູງອາຍຸ, ຢູ່ຄົນດຽວ<br>o ສະມາຊິກຈາກຄະນະບ້ານ (ຜູ້ຊາຍ),<br>o ສະມາຊິກຈາກການນຳຫ້ອງວ່າການເມືອງ (ຜູ້ຊາຍ)<br>o ວິຊາການໂຄງການ (ຜູ້ຊາຍ)<br><br>2. ຂໍ້ຄວາມເພື່ອຖາມໃນການເຮັດກິດກຳ<br><br>▪ ຂ້ອຍເປັນຫົວໜ້າຄອບຄົວ ແລະ ມີຊື່ໃນໃບຕາດິນທຸກຕອນ;<br>▪ ຂ້ອຍມີຄວາມໝັ້ນໃຈໃນການອະທິບາຍສິດກ່ຽວກັບທີ່ດິນໃຫ້ຊຸມຊົນ;<br>▪ ຂ້ອຍສາມາດພົບກັບເຈົ້າເມືອງເພື່ອສົນທະນາເລື່ອງການສຳປະທານທີ່ດິນໃນບ້ານ;<br>▪ ຂ້ອຍສາມາດເຂົ້າຮ່ວມປະຊຸມເລື່ອງທີ່ດິນ ແລະ ຊັບພະຍາກອນທຳມະຊາດໃນບ້ານ;<br>▪ ຂ້ອຍສາມາດເປັນຜູ້ຫຼັກໃນການຕັດສິນໃຈມອບ-ໂອນ ສິດນຳໃຊ້ທີ່ດິນໃນຄອບຄົວ;<br>▪ ຂ້ອຍສາມາດໄປປິ່ນປົວສຸຂະພາບໃນໂຮງໝໍເອກະຊົນທີ່ມີຄ່າໃຊ້ຈ່າຍສູງ.<br><br>**ການດຳເນີນກິດຈະກຳ:**<br><br>ຂໍອາສາສະໝັກຈາກຜູ້ເຂົ້າຮ່ວມ 6 ຄົນ, ຍິງ 3 ແລະ ຊາຍ 3 ອອກມາຢືນເປັນແຖວຢູ່ໜ້າເວທີ ແລະ ຜູ້ເຂົ້າ ຮ່ວມສ່ວນທີ່ເຫຼືອໃຫ້ສັງເກດການ. ບອກທຸກຄົນວ່າ ທັງ 6 ຄົນ ຈະໄດ້ຕົວລະຄອນສະແດງເປັນບົດບາດສົມມຸດ ໃນເຈ້ຍທີ່ແຈກໃຫ້ ໂດຍບໍ່ບອກໃຫ້ຄົນໃກ້ຕົວ ແລະ ຜູ້ເຂົ້າຮ່ວມຄົນອື່ນຮູ້ນຳ ວ່າຕົນເອງໄດ້ສະແດງເປັນໃຜ. ຜູ້ອຳນວຍຄວາມສະດວກອ່ານ ຂໍ້ຄວາມທີ່ກຽມໄວ້ຂ້າງເທິງເທື່ອລະຂໍ້ຄວາມ. ອາສາສະໝັກ ແຕ່ລະຄົນ ຕ້ອງປິດບັງໄວ້ວ່າ ຕົນເອງໄດ້ບົດບາດຫຍັງ ແລະ ຕ້ອງສະແດງບົດບາດເປັນຕົວລະຄອນທີ່ໄດ້ນັ້ນ ເວລາຜູ້ອຳນວຍຄວາມສະດວກ ອ່ານຂໍ້ຄວາມ. ຖ້າຂໍ້ຄວາມ ນັ້ນຖືກກັບຕົວລະຄອນທີ່ຕົນໄດ້ ຫຼື ຕົວລະຄອນນັ້ນມີ ຫຼື ສາມາດເຮັດໄດ້ ໃຫ້ກ້າວໄປທາງໜ້າ ໜຶ່ງບາດກ້າວ, ຖ້າບໍ່ແມ່ນ ແມ່ນໃຫ້ຖອຍຫຼັງໜຶ່ງ |

| | |
|---|---|
| | ບາດກ້າວ. ອ່ານຂໍ້ຄວາມໃຫ້ໝົດ ໃຫ້ຜູ້ສະແດງຕົວລະຄອນ ຢູ່ບ່ອນໃຜລາວ ແລ້ວສົນທະນາກັບທຸກຄົນ ດ້ວຍການເລີ່ມຈາກຜູ້ທີ່ຖອຍຫຼັງມາຢູ່ເບື້ອງຫຼັງສຸດ ດ້ວຍການໃຊ້ ຄຳຖາມລຸ່ມນີ້<br>**ຄຳຖາມສົນທະນາ:**<br>▪ ຖາມຜູ້ທີ່ຢູ່ທາງຫຼັງສຸດ: ຍ້ອນຫຍັງເຈົ້າຈິ່ງຖອຍຫຼັງເລື່ອຍໆ ຕົວລະຄອນທີ່ເຈົ້າໄດ້ແມ່ນໃຜ? ເຈົ້າຮູ້ສຶກແນວ ໃດທີ່ຢູ່ໃນຕຳແໜ່ງນີ້? ເຈົ້າຢາກກ້າວໄປຂ້າງໜ້າ ຫຼື ຢາກເຮັດໄດ້ຄືຜູ້ທີ່ຢູ່ທາງໜ້າບໍ?, ແມ່ນຫຍັງ ທີ່ເຮັດໃຫ້ເຈົ້າບໍ່ ສາມາດທີ່ຈະກ້າວໄປຂ້າງໜ້າໄດ້ຄືຜູ້ອື່ນ ແລະ ເຈົ້າຕ້ອງການ ການສະໜັບສະໜູນຫຍັງຈາກກຸ່ມຄົນ ທີ່ຢູ່ທາງໜ້າ?<br>▪ ຖາມຜູ້ທີ່ຢູ່ທາງໜ້າສຸດ ລົງມາຮອດຜູ້ຢູ່ກາງ: ອັນໃດທີ່ເຮັດໃຫ້ເຈົ້າຢ່າງມາຢູ່ຈຸດນີ້ໄດ້? ເຈົ້າຮູ້ສຶກແນວໃດ ຖ້າສະມາ ຊິກບ້ານເຈົ້າ ຫຼື ຊາວບ້ານຍັງຖືກປະລະຢູ່ທາງຫຼັງຫຼາຍຄົນແບບນີ້? ເຈົ້າຈະເຮັດແນວໃດເພື່ອໃຫ້ເຂົາເຈົ້າ ສາມາດກ້າວຂຶ້ນມາ ຄືກັນກັບກຸ່ມຄົນທີ່ຢູ່ທາງກາງ ແລະ ທາງໜ້ານີ້? |
| **ຂັ້ນຕອນທີ 2** | **ອະທິບາຍຄຳສັບ**<br><br>ສະເໜີນິຍາມຂອງການມີສ່ວນຮ່ວມຂ້າງລຸມນີ້ໃຫ້ກັບຜູ້ເຂົ້າຮ່ວມ ພ້ອມທັງອະທິບາຍ ຄວາມໝາຍຂອງນິຍາມ.<br><br>**ການມີສ່ວນຮ່ວມທາງ ສັງຄົມ (Social Inclusion):** ແມ່ນການຫຼຸດຄວາມບໍ່ເທົ່າທຽມ/ຄວາມບໍ່ສະເໝີພາບໃນຫຼາຍດ້ານ ລະຫວ່າງກຸ່ມຜູ້ທີ່ດ້ອຍໂອກາດ ແລະ ສັງຄົມໂດຍລວມ. ນີ້ເປັນການປິດຊ່ອງຫວ່າງ ຂອງຄວາມບໍ່ສະເໝີພາບ/ຄວາມບໍ່ເທົ່າທຽມ ດ້ວຍການເປີດໂອກາດ ແລະ ສ້າງສິ່ງແວດລ້ອມ ເພື່ອໃຫ້ເຂົາເຈົ້າໄດ້ມີສ່ວນຮ່ວມທີ່ສະເໝີພາບ ແລະ ກ້າວໄປສູ່ຄວາມເທົ່າທຽມທີ່ເປັນທຳຫຼາຍຂຶ້ນ.<br><br>ມັນເປັນຂະບວນການຈັດຕັ້ງປະຕິບັດ ແລະ ເພີ່ມການມີສ່ວນຮ່ວມທີ່ສະເໝີພາບ ແລະ ເທົ່າທຽມ ໃນຂະບວນການທີ່ເປັນການສ້າງຄວາມຢູ່ດີກິນດີ ແລະ ສ້າງພື້ນທີ່ໃຫ້ກັບພວກເຂົາ ເພື່ອພັດທະນາຕົນເອງຢ່າງມີຄວາມເປັນອິດສະລະປາສະຈາກສິ່ງກີດຂວາງ.<br><br>*(ຄັດຈາກ ຄູ່ມື ຄວາມສະເໝີພາບທາງເພດ ແລະ ການມີສ່ວນຮ່ວມທາງສັງຄົມ, SNV, 2012)* |
| **ຂັ້ນຕອນທີ 3** | **ສະເໜີຮູບແບບຂອງການມີສ່ວນຮ່ວມ**<br>ອະທິບາຍຮູບແບບຂອງການມີສ່ວນຮ່ວມທາງສັງຄົມ ໂດຍໃຊ້ຮູບເບື້ອງລຸ່ມ. |

<table>
<tr><td></td><td>

<br>▪ ຮູບຊ້າຍມືເບື້ອງເທິງສະແດງເຖິງການບໍ່ມີສ່ວນຮ່ວມ<br>▪ ຮູບຂວາມືເບື້ອງເທິງແມ່ນການແຍກ ແຕ່ບໍ່ແມ່ນແບ່ງແຍກ, ການແຍກເພື່ອໃຫ້ຮູ້ວ່າຜູ້ທີ່ຍັງຢູ່ເບື້ອງຫຼັງມີໃຜແດ່ ແລະ ມີຈັກຄົນ<br>▪ ຮູບຊ້າຍມືເບື້ອງລຸ່ມແມ່ນການເອົາມາຮ່ວມ ແຕ່ຍັງຈັດເປັນ ກຸ່ມຜູ້ຢູ່ເບື້ອງຫຼັງຢູ່ພາຍໃນກຸ່ມໃຫຍ່<br>▪ ຮູບຂວາມືເບື້ອງລຸ່ມແມ່ນການມີສ່ວນຮ່ວມ ໝາຍຄວາມ ວ່າໄດ້ມີການປິດຊ່ອງວ່າງຂອງຄວາມບໍ່ເທົ່າທຽມກັນ, ທຸກຄົນ ມີສິດ ແລະ ໄດ້ຮັບການປະຕິບັດທີ່ເທົ່າທຽມ-ເປັນທຳ ແລະ ສະໜັບສະໜູນເຊິ່ງກັນ ແລະ ກັນ.</td></tr>
<tr><td>ຂັ້ນຕອນທີ 4</td><td>ສົນທະນາການສ້າງສິ່ງອຳນວຍຄວາມສະດວກເພື່ອຮັບປະກັນໃນການມີສ່ວນຮ່ວມ<br><br>ສົນທະນາກັບຜູ້ເຂົ້າຮ່ວມ ກ່ຽວກັບການສ້າງສິ່ງອຳນວຍຄວາມສະດວກ ເພື່ອການມີສ່ວນຮ່ວມທີ່ປະຕິບັດຜ່ານມາ ໃນແຕ່ລະຫ້ອງການມີວິທີການແນວໃດ ແລະ ຫຼັງຈາກນັ້ນ ນຳພາສາທິດການສ້າງຄວາມເຂົ້າໃຈຕໍ່ຄວາມຈຳເປັນ-ຕ້ອງການ ຂອງຜູ້ທີ່ຍັງຢູ່ເບື້ອງຫຼັງ.</td></tr>
<tr><td>ຂັ້ນຕອນທີ 5</td><td>ສາທິດການສ້າງສິ່ງອຳນວຍຄວາມສະດວກໃນການມີສ່ວນຮ່ວມ<br>ນຳພາຜູ້ເຂົ້າຮ່ວມເຮັດກິດຈະກຳ ການສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ຜູ້ທີ່ຢູ່ເບື້ອງຫຼັງ. ແຫຼ່ງທີ່ມາ: ດັດປັບຈາກ ເຄື່ອງການຝຶກອົບຮົມ ການມີສ່ວນຮ່ວມຂອງຄົນພິການ ຂອງ ຊີບີເອັມ (Christian Blind Mission – CBM)<br>ຂໍອະສາສະໝັກຜູ້ເຂົ້າຮ່ວມ 4 ຄົນ ສະແດງບົດບາດສົມມຸດເປັນ<br>1. ແມ່ຍິງພິການ ຖືພາແກ່ ສາທິດບົດບາດສົມມຸດກຳລັງນັ່ງແຕ່ງອາຫານ;<br>2. ພໍ່ເຖົ້າຢູ່ຄົນດຽວ ສາຍຕາບໍ່ເຫັນແຈ້ງດີ ສາທິດກຳລັງໄປຫາຜັກໃນປ່າໃກ້ບ້ານມາເປັນອາຫານ<br>3. ແມ່ຍິງຊົນເຜົ່າບໍ່ເຂົ້າໃຈພາສາ ມາເຂົ້າຮ່ວມປະຊຸມເລື່ອງທີ່ດິນ ມີລູກນ້ອຍມານຳ ;</td></tr>
</table>

| | |
|---|---|
| | 4. ແມ່ຍິງທີ່ມີລູກນ້ອຍຖືກເລືອກມາເປັນສະມາຊິກໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ເຂົ້າຮ່ວມໄກ່ເກ່ຍຂໍ້ຂັດແຍ່ງເລື່ອງທີ່ດິນກັບຄະນະຢູ່ຂັ້ນບ້ານ ແລະ ມີລູກນ້ອຍມານຳ.<br><br>ສົນທະນາກ່ຽວກັບຄວາມລໍາບາກທີ່ແຕ່ລະຕົວລະຄອນພົບພໍ້ໃນເວລາເຮັດກິດຈະກໍາ ແລະ ຫາວິທີທີ່ເໝາະສົມໃນການສ້າງ ສິ່ງແວດລ້ອມ ໃນການສະໜັບສະໜູນ ແລະ ສົ່ງເສີມເພື່ອການມີສ່ວນຮ່ວມ. |
| **ຂັ້ນຕອນທີ່ 6** | **ສະຫຼຸບ**<br><br>ສະຫຼຸບກິດຈະກໍາໂດຍລວມ ແລະ ສົນທະນາກັບຜູ້ເຂົ້າຮ່ວມໃນການສ້າງສິ່ງອໍານວຍຄວາມສະດວກ ແລະ ຕ້ອງບົນພື້ນຖານ ຄວາມຈໍາເປັນ ແລະ ຕ້ອງການຂອງບຸກຄົນນັ້ນໆ ແລະ ລວມທັງການປູກຈິດສໍານຶກໃຫ້ກັບຊຸມຊົນ ໃນການຊ່ວຍເຫຼືອເຊິ່ງກັນ ແລະ ກັນ. ການສ້າງສິ່ງອໍານວຍຄວາມສະດວກເພື່ອການມີສ່ວນຮ່ວມຂອງຄົນພິການ ຕ້ອງໄດ້ເອົາໃຈໃສ່ ແລະ ເຊີນຊ່ຽວຊານ ສະເພາະດ້ານເຂົ້າມາຊ່ວຍ ເພື່ອຫຼີກລ້ຽງການປະຕິບັດທີ່ອາດນໍາໄປສູ່ຜົນກະທົບດ້ານລົບ. |

## ກິດຈະກໍາທີ 6: ເຄື່ອງມືປະເມີນການເຮັດກິດຈະກໍາ ແລະ ການຫຼີກລ້ຽງການປະຕິບັດທີ່ອາດເປັນຜົນລົບກັບຜູ້ອື່ນ (Gender Continuum)

*ແຫຼ່ງທີ່ມາ: ດັດປັບຈາກ ເຄື່ອງມືປະເມີນການເຮັດກິດຈະກໍາເພດພາວະ ຂອງ ອົງການ ແຄຣນານາຊາດ*

**ຈຸດປະສົງ:** ເພື່ອເຂົ້າໃຈ ແລະ ວັດແທກພຶດຕິກໍາ ແລະ ລວມທັງການອອກແບບ ແລະ ຈັດຕັ້ງປະຕິບັດໂຄງການ ວຽກງານການສົ່ງເສີມຄວາມສະເໝີພາບຍິງ-ຊາຍຢູ່ຈຸດໃດ ເພື່ອຫຼີກລ້ຽງການປະຕິບັດທີ່ເປັນທາງລົບ ແລະ ເນັ້ນ ໄປສູ່ການປ່ຽນແປງທີ່ຍາວນານ.

**ການກະກຽມພື້ນທີ່:** ພື້ນທີ່ກວ້າງສໍາລັບຜູ້ເຂົ້າຮ່ວມ 30 ຄົນ

**ເອກະສານ/ອຸປະກອນ:** ໂປເຈັກເຕີ, ບົດສະເໜີຮູບພາບຂອງຂະບວນການ ແລະ ຄໍາອະທິບາຍແຕ່ລະຂັ້ນ

**ເວລາ:** 30 ນາທີ

**ຂັ້ນຕອນ ແລະ ຂະບວນການດໍາເນີນກິດຈະກໍາ:**

| | |
|---|---|
| **ຂັ້ນຕອນທີ 1** | **ສົນທະນາຄວາມເຂົ້າໃຈເບື້ອງຕົ້ນ**<br><br>ຖາມຜູ້ເຂົ້າຮ່ວມວ່າ ພາຍໃນອົງກອນຂອງຕົນ ມີເຄື່ອງມືຫຍັງ ເພື່ອໃຊ້ໃນການປະເມີນຄືນການປະຕິບັດກິດຈະກຳ ໃນການສົ່ງເສີມວຽກງານ ຄວາມສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມທາງສັງຄົມ. ໃຫ້ຜູ້ເຂົ້າຮ່ວມແລກປ່ຽນ ຖ້າມີ. ຫຼັງຈາກນັ້ນ ສະເໜີຮູບພາບຂະບວນການລຸ່ມນີ້ໃຫ້ກັບຜູ້ເຂົ້າຮ່ວມ.<br><br><br>ປັບຈາກເຄື່ອງມື Gender Continuum, CARE International |
| **ຂັ້ນຕອນທີ 2** | **ການອະທິບາຍຄວາມໝາຍແຕ່ລະຂັ້ນ**<br><br>▪ **ເປັນລົບ** (Negative/Harmful/Unaware): ໝາຍຄວາມວ່າ ໃນເບື້ອງຕົ້ນ ໂຄງການຮູ້ແລ້ວວ່າ ຂະບວນການ ສ້າງບົດບາດຍິງ-ຊາຍ ຫຼື ຄວາມເປັນເພດພາວະ ຫຼື ຄວາມບໍ່ສະເໝີພາບທາງເພດເປັນແນວໃດໃນຊຸມຊົນ ແຕ່ບໍ່ໄດ້ເອົາໃຈໃສ່, ບໍ່ສົນໃຈໃນ ການທີ່ຈະແກ້ໄຂ ແລະ ຍັງປະຕິບັດກິດຈະກຳນັ້ນຄືເກົ່າ ທີ່ເປັນການເຮັດຊ້ຳຄືນຕາມ ມາດຖານທາງສັງຄົມ ທີ່ເປັນຕົວກີດໜ່ວງຄວາມກ້າວໜ້າຂອງ ແມ່ຍິງ ແລະ ເດັກຍິງ ແລະ ສົ່ງຜົນກະທົບໃນທາງລົບຕໍ່ເຂົາເຈົ້າ.<br>▪ **ບໍ່ຮັບຮູ້** (Blind/Neutral): ກິດຈະກຳໂຄງການ ແລະ ການປະພຶດປະຕິບັດຂອງພະນັກງານ ທີ່ບໍ່ສົນໃຈກັບວຽກງານ ຄວາມສະເໝີພາບຍິງ-ຊາຍ ແລະ ບໍ່ໃສ່ໃຈ, ບໍ່ໄດ້ເອົາມາພິຈາລະນາໃນການແກ້ໄຂ ມີແຕ່ເຮັດວຽກ ຫຼື ກິດຈະກຳອື່ນທີ່ເປັນວຽກຫຼັກຂອງໂຄງການ.<br>▪ **ມີຄວາມອ່ອນໄຫວ/ຮັບຮູ້** (Sensitive): ຮັບຮູ້ ແລະ ໃຫ້ຄວາມສຳຄັນວ່າ ໃນຊຸມຊົນມີບັນຫາເລື່ອງຄວາມບໍ່ສະ ເໝີພາບລະຫວ່າງຍິງ-ຊາຍ ແລະ ຄວາມຫຼາກຫຼາຍຄືແນວໃດ ແລະ ການກໍ່ສ້າງຄວາມເປັນຍິງ-ຊາຍ ໄດ້ສົ່ງຜົນ ກະທົບແນວໃດກັບຜູ້ຄົນໃນສັງຄົມ. ໂຄງການ ໄດ້ເອົາວຽກງານການສົ່ງເສີມຄວາມສະເໝີພາບຍິງ-ຊາຍເຂົ້າໃນກິດຈະກຳຂອງຕົນ, ອາດມີການຝຶກພະນັກງານ, ມີຕົວຊີ້ວັດ, ແຕ່ຍັງບໍ່ທັນມີມາດຖານ ແລະ ເຄື່ອງມືໃນການຈັດຕັ້ງປະຕິບັດກິດຈະກຳທີ່ຊັດເຈນ. |

| | |
|---|---|
| | ▪ **ມີຄວາມຮັບຜິດຊອບ** (Responsive): ຮັບຮູ້ ແລະ ໃຫ້ຄວາມສຳຄັນກັບວຽກງານການສົ່ງເສີມຄວາມສະເໝີພາບຍິງ-ຊາຍ, ມີການສ້າງພະນັກງານ, ມີເຄື່ອງມື ແລະ ມີລະບົບຮອງຮັບວຽກງານດັ່ງກ່າວ. ການຈັດຕັ້ງປະຕິບັດກິດຈະກຳອາດມີທັງກິດຈະກຳສະເພາະ ແລະ ກິດຈະກຳໃນລັກສະນະເຊື່ອມສານ ແລະ ເອົາໃຈໃສ່ໃນການການວາງແຜນການຈັດຕັ້ງປະຕິດບັດ, ຕິດຕາມ, ກວດກາຢ່າງໃກ້ຊິດຕິດແທດ ແລະ ຕໍ່ເນື່ອງ. ບາງຄັ້ງອາດມີການນຳໄປສູ່ການປ່ຽນແປງທາງດ້ານນະໂຍບາຍ ແລະ ມີການຍອມຮັບໃນວົງກວ້າງ.<br>▪ **ການປ່ຽນແປງທີ່ຍາວນານ ແລະ ຍືນຍົງ** (Transformative): ຮັບຮູ້ບັນຫາຄວາມບໍ່ສະເໝີພາບ, ຄວາມບໍ່ເປັນທຳ ໃນສັງຄົມ-ຊຸມຊົນ ແລະ ເອົາໃຈໃສ່ໃນການຈັດຕັ້ງປະຕິບັດກິດຈະກຳ ລວມທັງໃນລັກສະນະເຊື່ອມສານ ແລະ ກິດຈະກຳສະເພາະ. ມີທັງການແກ້ໄຂ ແລະ ປັບປ່ຽນນະໂຍບາຍ ແລະ ຄວາມເຊື່ອທາງຮີດຄອງປະເພນີທີ່ອາດເປັນຕົວກີດກັ້ນການນຳໄປສູ່ຄວາມສະເໝີພາບ. ເມື່ອໂຄງການໝົດໄປ ການປ່ຽນແປງດ້ານຄວາມສະເໝີພາບທີ່ກ້າວໄປສູ່ຄວາມເທົ່າທຽມ ຍັງດຳເນີນ ແລະ ສືບຕໍ່ປະຕິບັດໃນຊຸມຊົນ. |
| **ຂັ້ນຕອນທີ່ 3** | **ສະຫຼຸບ**<br><br>ຫຼັກການນີ້ແມ່ນເຄື່ອງມືທີ່ມີຄວາມສຳຄັນ ໃນການກວດສອບການອອກແບບກິດຈະກຳໂຄງການ, ການຈັດຕັ້ງປະຕິບັດ ແລະ ລວມທັງການຕິດຕາມ ແລະ ປະເມີນຜົນ. ທີ່ສຳຄັນຍັງສາມາດໃຊ້ກັບບຸກຄົນໃນການປະເມີນຕົນເອງວ່າ ໄດ້ເຮັດຫຍັງລົງໄປ. ທຸກໆ ການປະພຶດຄອນຫຼືກລ້ຽງພື້ນທີ່ສີແດງໃນຮູບຂ້າງເທິງ ທີ່ເປັນການປະຕິບັດທີ່ອາດນຳໄປສູ່ການສ້າງຜົນກະທົບດ້ານລົບຕໍ່ກັບຜູ້ອື່ນ ແລະ ຕົນເອງ. ແຕ່ລະໂຄງການ ແລະ ອົງກອນ ສາມາດທີ່ຈະສ້າງເຄື່ອງມືນີ້ຂຶ້ນມາເພື່ອຮັບປະກັນໃນການປະກອບສ່ວນເຂົ້າໃນການ ກ້າວໄປສູ່ ການປ່ຽນແປງທີ່ດີຍາວນານ ແລະ ນຳໄປສູ່ຄວາມເທົ່າທຽມໃນສັງຄົມ. |

# ເອກະສານຊ້ອນທ້າຍ: ຕົວຢ່າງກໍລະນີສຶກສາ

## ກໍລະນີສຶກສາທີ່ 1:
## ກິດຈະກຳການສ້າງຄວາມເຂັ້ມແຂງໃຫ້ກັບໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ

ໂຄງການ "ເປັນທຳ" ໄດ້ເຮັດວຽກກັບຊຸມຊົນທີ່ຢູ່ໃນເຂດເທດສະບານຕົວເມືອງ ແລະ ເຂດຊົນນະບົດ. ໃນເຂດເທດສະບານ ສ່ວນຫຼາຍແມ່ນຊົນເຜົ່າລາວ ແລະ ກຸ່ມຊົນເຜົ່າອື່ນໆ ແຕ່ເພດຍິງ ແລະ ເພດຊາຍ ໄດ້ຮັບການສຶກສາໃນລະດັບໜຶ່ງ, ມີອາຊີບ ເປັນພະນັກງານ, ຄ້າຂາຍ ສ່ວນຫຼາຍ ແລະ ເຮັດການຜະລິດກະສິກຳ-ລ້ຽງສັດເປັນສ່ວນໜ້ອຍ. ໃນເຂດຊົນນະບົດ ປະຊາຊົນສ່ວນຫຼາຍ ເປັນຊົນເຜົ່າ ແລະ ມີອາຊີບເຮັດການຜະລິດທາງດ້ານກະສິກຳ ເພື່ອບໍລິໂພກ ແລະ ຂາຍສ່ວນເກີນ. ການສຶກສາຂອງປະຊາຊົນບໍ່ສູງ ແລະ ເພດຍິງບາງຊົນເຜົ່າ ບໍ່ສາມາດອ່ານ ແລະ ຂຽນໜັງສືລາວໄດ້.

ທີມງານໂຄງການ "ເປັນທຳ" ໄດ້ແນະນຳໃຫ້ເພດຍິງ ແລະ ຊາຍ (ລວມທັງຄົນພິການ, ຮ້າງ, ໝ້າຍ, ຄອບຄົວ ທີ່ພົບຄວາມຫຍຸ້ງຍາກທາງດ້ານເສດຖະກິດ ແລະ ຜູ້ດ້ອຍໂອກາດດ້ານອື່ນໆ) ໃຫ້ເຂົ້າຮ່ວມກິດຈະກຳ ສ້າງຄວາມ

ເຂັ້ມແຂງໃຫ້ແກ່ຊຸມຊົນ ໃນການຄຸ້ມຄອງທີ່ດິນ ດ້ວຍການເຜີຍແຜ່ ຄວາມຮູ້ທາງດ້ານກົດໝາຍທີ່ດິນ ແລະ ກົດໝາຍອື່ນໆ ທີ່ກ່ຽວຂ້ອງກັບການຄຸ້ມຄອງຊັບພະຍາກອນທຳມະຊາດ. ນອກຈາກນັ້ນ ໂຄງການ ຍັງສ້າງຄວາມເຂັ້ມແຂງໃຫ້ແກ່ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ເພື່ອໃຫ້ເພດຍິງໄດ້ມີສ່ວນຮ່ວມ ໃນການຄຸ້ມຄອງທີ່ດິນ ແລະ ໄກ່ເກ່ຍຂໍ້ຂັດແຍ່ງຕ່າງໆ ແລະ ລວມທັງຂໍ້ຂັດແຍ່ງທາງດ້ານທີ່ດິນ. ໂຄງການໄດ້ວາງມາດຕະຖານຮ່ວມກັບແຕ່ລະບ້ານ ໃຫ້ມີເພດຍິງຢ່າງນ້ອຍ 2 ຄົນປະກອບເປັນຄະນະໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ເຊິ່ງມີຈຳນວນສະມາຊິກທັງໝົດ 5 ຄົນ. ເມື່ອໄດ້ ສະມາຊິກຄົບຕາມຈຳນວນແລ້ວ ໂຄງການ ໄດ້ຈັດຝຶກອົບຮົມຫຼາຍຫົວຂໍ້ ທີ່ພົວພັນກັບວຽກງານຄຸ້ມຄອງທີ່ດິນ ລວມທັງການນຳໃຊ້ເຄື່ອງປ່າຂອງດົງ ແລະ ການປົກປັກຮັກສາສິ່ງແວດລ້ອມ, ການຝຶກອົບຮົມແມ່ນໃຊ້ພາສາລາວ (ພາສາທາງການ) ແລະ ເຄື່ອງມືການຝຶກຄືກັນທຸກໆບ້ານ. 3 ປີ ຜ່ານໄປ ໂຄງການດຳເນີນກິດຈະກຳແບບເກົ່າ ເພາະເຫັນວ່າໄດ້ຜົນດີທີ່ມີເພດຍິງເຂົ້າຮ່ວມ ແຕ່ເພດຍິງສ່ວນຫຼາຍ ທີ່ຢູ່ໃນໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານຍັງພົບກັບຄວາມທ້າທາຍຫຼາຍດ້ານ ເມື່ອທຽບໃສ່ຜູ້ຊາຍ ເຊັ່ນ: ຄວາມກ້າຫານ, ຄວາມສາມາດ, ຄວາມໝັ້ນໃຈ ແລະ ການຍອມຮັບຍັງບໍ່ສູງ.

**ຄຳຖາມສົນທະນາ: ທ່ານຄິດວ່າໂຄງການນີ້ໄດ້ສ້າງຄວາມເຂັ້ມແຂງໃຫ້ກັບເພດຍິງແທ້ບໍ່ ແລະ ຈະນຳໄປສູ່ຄວາມເທົ່າທຽມບໍ່? ຖ້າແມ່ນ ຫຼື ບໍ່ແມ່ນ ຍ້ອນຫຍັງ? ກິດຈະກຳນີ້ຢູ່ຂັ້ນຕອນໃດຂອງເຄື່ອງມືປະເມີນຄວາມສະເໝີພາບຍິງ-ຊາຍ?**

## ກໍລະນີສຶກສາທີ 2: ກິດຈະກຳການສ້າງຄວາມ ເຂັ້ມແຂງທາງດ້ານຄວາມສະເໝີພາບຍິງ-ຊາຍ ໃຫ້ກັບຊຸມຊົນ

ໂຄງການ "ກ້າວໜ້າ" ໄດ້ເຮັດວຽກກັບຊຸມຊົນທົ່ວປະເທດ ເພື່ອໃຫ້ຄວາມຮູ້ແກ່ຊຸມຊົນທາງດ້ານ ສິດໃນການເຂົ້າເຖິງ, ການຄອບຄອງ ແລະ ນຳໃຊ້ທີ່ດິນຕາມປະເພນີ. ໃນພື້ນທີ່ ທີ່ໂຄງການເຮັດວຽກຮ່ວມກັບເພດຍິງຊົນເຜົ່າບາງບ້ານ ທີ່ບໍ່ສາມາດອ່ານ ແລະ ຂຽນພາສາລາວໄດ້.

ໂຄງການ "ກ້າວໜ້າ" ຍັງໄດ້ເອົາໃຈໃສ່ກັບວຽກງານຄວາມສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງຄວາມຫຼາກຫຼາຍ ເຂົ້າໃນກິດຈະກຳ, ມາດຖານໂຄງການຄື ເວລາຝຶກອົບຮົມຕ້ອງໃຫ້ມີຈຳນວນເພດຍິງ ແລະ ຊາຍ ເທົ່າກັນ ຫຼືຈຳນວນເພດຊາຍຫຼາຍກວ່າຈຳນວນເພດຍິງ ຍິ່ງດີຫຼາຍ, ລວມທັງຊົນເຜົ່າ ແລະ ຄົນພິການ. ການຝຶກ ແມ່ນນຳໃຊ້ເຄື່ອງມືອັນດຽວກັນທຸກໆ ບ້ານ ພຽງແຕ່ຈັດການຝຶກຕາມໜ່ວຍ ແລະ ຕາມເຂດ. ບາງຄັ້ງການຝຶກອົບຮົມ ແມ່ນໄດ້ຈັດສະເພາະ ສຳລັບເພດຍິງ, ຊົນເຜົ່າ ແລະ ຄົນພິການຕາມຄວາມເໝາະສົມ. ຫຼັງຈາກເຮັດວຽກໄປໄດ້ 3 ປີ ທີມ

ງານໄດ້ມີການຕິດຕາມຄວາມຄືບໜ້າຂອງກິດຈະກຳ ປະກົດວ່າເພດຍິງ, ຊົນເຜົ່າ ແລະ ຄົນພິການ ຮັບຮູ້ຂໍ້ມູນ ຂ່າວສານ ກ່ຽວກັບສິດຂອງຕົນ. ຜົນການຕິດຕາມຍັງພົບວ່າ ເພດຍິງໃນ ຈຳນວນສ່ວນຫຼາຍໃນບ້ານ ຍັງອີງໃສ່ຜົວ, ລູກຊາຍ ເປັນຜູ້ຫຼັກໃນການຕັດສິນໃຈກ່ຽວກັບ ການນຳໃຊ້ທີ່ດິນ ແລະ ການໂອນສິດນຳໃຊ້ທີ່ດິນ ແມ່ຍິງເອງຍັງຮັບ ພາລະໃນການອອກແຮງງານຫຼັກ ໃນການຜະລິດກະສິກຳ ແລະ ເຮັດໜ້າທີ່ ດູແລສະມາຊິກຄອບຄົວ, ເຮັດວຽກ ເຮືອນ  ຍັງຖືວ່າເປັນໜ້າທີ່ຂອງເພດຍິງ. ສາເຫດດັ່ງກ່າວນີ້ເຮັດໃຫ້ເພດຍິງ ບໍ່ຄ່ອຍ ມາປະຊຸມ ແລະ ບໍ່ເຂົ້າຮ່ວມ ການຝຶກອົບຮົມໄດ້ຫຼາຍເທົ່າກັບເພດຊາຍ.

**ຄຳຖາມສົນທະນາ: ໂຄງການນີ້ໄດ້ສ້າງຄວາມເຂັ້ມແຂງໃຫ້ກັບເພດຍິງບໍ ແລະ ຈະນຳໄປສູ່ຄວາມ ເທົ່າທຽມບໍ? ຖ້າ ແມ່ນ ຫຼື ບໍ່ແມ່ນ ຍ້ອນຫຍັງ? ກິດຈະກຳນີ້ຢູ່ຂັ້ນຕອນໃດຂອງເຄື່ອງມືປະເມີນຄວາມສະເໝີພາບຍິງ-ຊາຍ?**

## ກໍລະນີສຶກສາທີ 3:
## ໂຄງການ ການເຂົ້າເຖິງການນຳໃຊ້ທີ່ດິນທີ່ເທົ່າທຽມ

ໂຄງການ “ການເຂົ້າເຖິງທີ່ດິນທີ່ເທົ່າທຽມ” ໄດ້ຮັບທຶນສະໜັບສະໜູນ ໃນການຈັດຕັ້ງປະຕິບັດກິດຈະກຳ ເພື່ອຫຼີກລ້ຽງການເກີດຂໍ້ຈັດແຍ່ງທາງດ້ານທີ່ດິນໃນຊຸມຊົນ ດ້ວຍການຈັດສັນທີ່ດິນເພື່ອທຳການຜະລິດ ໃຫ້ແກ່ຊຸມ ຊົນ ທີ່ຢູ່ເຂດ ຕົວເມືອງ ແລະ ຊົນນະບົດທີ່ເປັນບ້ານຊົນເຜົ່າ.

ທີມງານໂຄງການ ໄດ້ເຮັດການສຳຫຼວດເຂດພື້ນທີ່ໂຄງການ ກ່ອນທີ່ຈະດຳເນີນກິດຈະກຳເພື່ອ ເປັນຂໍ້ມູນພື້ນຖານ ໃນການ ອອກແບບກິດຈະກຳໂຄງການເພື່ອບໍ່ໃຫ້ເກີດຄວາມຂັດແຍ່ງ ດ້ວຍການຫຼຸດຊ່ອງຫວ່າງ ຄວາມບໍ່ເທົ່າທຽມ ໃນການເຂົ້າເຖິງ, ການນຳໃຊ້ ແລະ ການຄຸ້ມຄອງທີ່ດິນ ເພື່ອການຜະລິດກະສິກຳ ແລະ ປົກປັກຮັກສາປ່າໄມ້. ທີມ

ງານ ໄດ້ຜະລິດເຄື່ອງມືການຝຶກອົບຮົມໂດຍອີງໃສ່ ກົດໝາຍ ວ່າດ້ວຍ ທີ່ດິນ, ກົດໝາຍວ່າດ້ວຍປ່າໄມ້ ແລະ ກົດໝາຍວ່າດ້ວຍຄວາມສະເໝີພາບຍິງ-ຊາຍ. ຮູບແບບຂອງການຈັດຕັ້ງປະຕິບັດກິດຈະກໍາ ແມ່ນໄດ້ ອອກແບບໃຫ້ ເໝາະສົມກັບພື້ນທີ່, ໃຫ້ຄວາມສໍາຄັນກັບທຸກເພດ, ທຸກໄວ, ການແກ້ໄຂບັນຫາ ແລະ ປັດໄຈທີ່ພາ ໃຫ້ເກີດ ຂໍ້ຂັດແຍ່ງທາງດ້ານທີ່ດິນ ແລະ ການນໍາໃຊ້ຊັບພະຍາກອນທໍາມະຊາດ ທີ່ເປັນສາເຫດຫຼັກຂອງ ຄວາມບໍ່ ສະຫງົບໃນຫຼາຍຄອບຄົວ ທັງສົ່ງຜົນກະທົບຕໍ່ຄວາມສະຫງົບສຸກຂອງຊຸມຊົນ, ຮູບແບບການ ຝຶກຍັງຕອບສະໜອງ ຕາມຄວາມຕ້ອງການ ແລະ ຈໍາເປັນຂອງປະຊາຊົນ ທາງດ້ານການສ້າງ ຄວາມສະເໝີພາບຍິງ-ຊາຍ, ການແບ່ງວຽກເຮັດໃນຄອບຄົວ, ການຊອກຫາອາຫານ, ລ້ຽງເດັກ, ດູແລຜູ້ອາວຸໂສ ແລະ ຄົນພິການ.

ຫຼັງຈາກໂຄງການສິ້ນສຸດ ຜົນການປະເມີນພົບວ່າ ປະຊາຊົນໃນຊຸມຊົນເຂົ້າໃຈຂໍ້ມູນທາງດ້ານກົດໝາຍ ແລະ ຂະບວນການ ເຂົ້າເຖິງ ການຊ່ວຍເຫຼືອທາງດ້ານທີ່ດິນ. ຂໍ້ຂັດແຍ່ງທາງດ້ານທີ່ດິນ ແລະ ຄອບຄົວໃນຊຸມຊົນ ຫຼຸດລົງ ແລະ ສາຍເຫດທີ່ພາໃຫ້ເກີດຂໍ້ຂັດແຍ່ງບໍ່ປາກົດເຫັນຫລາຍ, ຄວາມສະຫງົບສຸກພາຍໃນຄອບຄົວ ແລະ ຊຸມຊົນຄ່ອຍໆ ມີຄວາມພົ້ນເດັ່ນ. ເພດຊາຍ ແລະ ເພດຍິງ ທຸກຊົນເຜົ່າ ແລະ ລວມທັງຄົນພິການ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ແລະ ຕັດສິນ ໃຈຮ່ວມກັນ.

5 ປີຜ່ານໄປ ໂຄງການໄດ້ມີ ກິດຈະກໍາຕໍ່ຍອດ ກ່ຽວກັບການສ້າງຕົວແບບໄວໜຸ່ມ ທີ່ເປັນຕົວແທນຊຸມຊົນ ໃນການໃຫ້ຂໍ້ມູນ ກ່ຽວກັບທີ່ດິນ ແລະ ຊັບພະຍາກອນທໍາມະຊາດ ແກ່ຊຸມຊົນ. ໂຄງການ ໄດ້ເຮັດການສຶກສາເບື້ອງຕົ້ນອີກປະກົດວ່າ ຜົນໄດ້ຮັບຈາກການປະເມີນຜົນໂຄງການຜ່ານມາ ຍັງປະຕິບັດໃນຊຸມຊົນ ແລະ ທີ່ສໍາຄັນ ໄວໜຸ່ມຍິງ ແລະ ຊາຍຫຼາຍໆ ຄົນ ສະໝັກໃຈມາເປັນອາສາສະໝັກຕົວແບບ ກັບໂຄງການຄຸ້ມຄອງທີ່ດິນ ໂດຍທີ່ອົງການຈັດຕັ້ງບ້ານ ເປັນຜູ້ສະໜັບສະໜູນຢ່າງເຕັມທີ່.

**ຄໍາຖາມສົນທະນາ: ທ່ານຄິດວ່າໂຄງການນີ້ໄດ້ສ້າງຄວາມສະເໝີພາບຍິງ-ຊາຍ ແລະ ນໍາໄປສູ່ຄວາມເທົ່າທຽມແທ້ບໍ່? ຖ້າແມ່ນ ຫຼື ບໍ່ແມ່ນ ຍ້ອນຫຍັງ? ກິດຈະກໍານີ້ຢູ່ຂັ້ນຕອນໃດຂອງເຄື່ອງມືປະເມີນຄວາມສະເໝີພາບຍິງ-ຊາຍ?**

ປັບແກ້ ແລະ ປັບປຸງໂດຍ/ Revised and updated by:

HELVETAS LAOS

ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG

ໃຫ້ທຶນສະໜັບສະໜູນໂດຍ/ Funded by:

Government of Japan

JSDF Japan Social Development Fund

THE WORLD BANK IBRD • IDA | WORLD BANK GROUP

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC